ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

05-08 ພະຈິກ 2022
ປີທີ 11
ສະບັບທີ 889

## ຄະນະບໍລິຫານງານພັກສະພາແຫ່ງຊາດ ເຜີຍແຜ່ເຊື່ອມຊຶມບັນດາເອກະສານສຳຄັນ




(ສພຊ) ໃນວັນທີ 2 ພະຈິກ ຜ່ານມາ, ທີ່ຫ້ອງປະຊຸມຂອງສະພາແຫ່ງຊາດ ຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ຈັດກອງປະຊຸມເຜີຍແຜ່ເຊື່ອມຊຶມເອກະສານສຳຄັນຕ່າງໆ ໃນການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ຂອງອົງຄະນະພັກສະພາແຫ່ງຊາດ ໂດຍການເປັນປະທານຂອງສະຫາຍ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ ມີບັນດາສະຫາຍຄະນະບໍລິຫານງານພັກສະພາແຫ່ງຊາດ, ຄະນະພັກຮາກຖານ-ລັດຖະກອນທັງໝົດທົ່ວສະພາແຫ່ງຊາດເຂົ້າຮ່ວມ.

ທັງນີ້, ເພື່ອເປັນການກະກຽມບຸກຄະລາກອນໃຫ້ແກ່ອົງຄະນະພັກສະພາແຫ່ງຊາດ ຮັບປະກັນປະຕິບັດໃຫ້ຖືກຕ້ອງຕາມທິດຊີ້ນຳຂອງກົມການເມືອງສູນກາງພັກມີຄວາມເປັນເອກະພາບໃນທົ່ວພັກ; ຄາດຄະເນເປົ້າໝາຍພະນັກງານທີ່ຈະຊັບຊ້ອນ, ຈັດວາງເຂົ້າໃນຕຳແໜ່ງນຳພາ-ຄຸ້ມຄອງແຕ່ລະຂັ້ນ ໃຫ້ຮັບປະກັນລັກສະນະສືບ

ອ່ານຕໍ່ໜ້າ 2

## ສຳເລັດການທາບທາມຄຳເຫັນໃສ່ຮ່າງກົດໝາຍ 12 ສະບັບ



(ສພຊ) ວັນທີ 24 ຕຸລາຜ່ານມາ, ຢູ່ທີ່ສະໂມສອນແຂວງອຸດົມໄຊ ໄດ້ສຳເລັດກອງປະຊຸມທາບທາມຮ່າງກົດໝາຍທີ່ຈະນຳເຂົ້າຜ່ານກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ເຂົ້າຮ່ວມມີທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງອຸດົມໄຊ, ມີສະມາຊິກສະພາແຫ່ງຊາດ ຊຸດທີ IX ແລະ ສະມາຊິກສະພາປະຊາຊົນແຂວງຈາກ 4 ແຂວງຄື: ຜົ້ງສາລີ, ຫລວງນໍ້າທາ, ອຸດົມໄຊ ແລະ ບໍ່ແກ້ວ, ມີຄະນະຄົ້ນຄວ້າ, ກອງເລຂາຄະນະຄົ້ນຄວ້າຮ່າງກົດໝາຍ ແລະ ຄະນະຮັບຜິດຊອບກອງປະຊຸມເຂົ້າຮ່ວມ.

ໃນກອງປະຊຸມ, ຜູ້ຕາງໜ້າຄະນະຮັບຜິດຊອບສ້າງຮ່າງກົດໝາຍໄດ້ສະເໜີໂດຍຫຍໍ້ກ່ຽວກັບເຫດຜົນ, ຄວາມຈຳເປັນ ແລະ ຄາດຄະເນຜົນໄດ້ຮັບ ຈາກການສ້າງຮ່າງກົດໝາຍ ຈຳນວນ 12 ສະບັບ; ໃນນີ້, ສ້າງໃໝ່ 3 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍໜັງສືຜ່ານແດນ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍການທາງນໍ້າ (ສ້າງໃໝ່) ແລະ ຮ່າງກົດໝາຍວ່າດ້ວຍຫໍພິພິ

ອ່ານຕໍ່ໜ້າ 2

## ຕິລາຄາການຄຸ້ມຄອງ ການເຄື່ອນໄຫວຂອງສາສະໜາພຸດ




(ສພຊ) ໃນວັນທີ 4 ພະຈິກ 2022, ທີ່ສະພາແຫ່ງຊາດ (ສພຊ) ໄດ້ຈັດກອງປະຊຸມຕິລາຄາການຄຸ້ມຄອງ ການເຄື່ອນໄຫວຂອງສາສະໜາພຸດ ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ເຂົ້າຮ່ວມມີບັນດາທ່ານປະທານ-ຮອງປະທານກຳມາທິການບັນດາເຜົ່າ, ຮອງປະທານສູນກາງແນວລາວສ້າງຊາດ, ຮອງລັດຖະມົນຕີກະຊວງພາຍໃນ, ກຳມະການຂອງກຳມາທິການ, ຫົວໜ້າຫ້ອງການ ແລະ ຄະນະປະຈຳຂອງອົງການພຸດທະສາສະໜາສຳພັນລາວ, ຫົວໜ້າ-ຮອງຫົວໜ້າກົມໃຫຍ່ສັນຕິບານ, ຫົວໜ້າ-ຮອງຫົວໜ້າກົມວຽກງານສາສະໜາ, ຫົວໜ້າ-ຮອງຫົວໜ້າກົມຊົນເຜົ່າ ແລະ ສາສະໜາ ພ້ອມດ້ວຍພະນັກງານ-ວິ

ອ່ານຕໍ່ໜ້າ 3

## ສພຊ ຕິດແຜ່ນການໝາຍນຳໃຊ້ສຳລັບລົດຂອງລັດ



ໜ້າ 3

## ກອງປະຊຸມປຶກສາຫາລື ຂອງສະມາຊິກລັດຖະສະພາໝູ່ມໄອປາ ຄັ້ງທີ 2




(ສພຊ) ໃນວັນທີ 2 ພະຈິກ 2022, ທ່ານ ຄຳປະສິດ ເທບວົງສາ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ ພ້ອມດ້ວຍຄະນະວິຊາການ ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລື ຂອງສະມາຊິກລັດຖະສະພາໝູ່ມສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA)

ອ່ານຕໍ່ໜ້າ 2

## ສສຂ ແລະ ສສຂ ຕິດຕາມກວດກາ ແລະ ຊຸກຍູ້ ການຂຸດຄົ້ນແຮ່ທາດ ຢູ່ເມືອງລ້ອງແຈ້ງ



(ສພຊ) ເພື່ອຕິດຕາມ-ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານ ການທົດລອງຂຸດຄົ້ນແຮ່ທາດ ເພື່ອຊອກໃຫ້ເຫັນດ້ານດີ ທີ່ຄວນເສີມຂະຫຍາຍ ແລະ ດ້ານອ່ອນທີ່ຈະຕ້ອງຊອກຫາວິທີການແກ້ໄຂໃນການຈັດຕັ້ງປະຕິບັດບັນດານິຕິກຳທີ່ພົວພັນກັບວຽກງານຂຶ້ນທະບຽນທົດລອງຂຸດຄົ້ນແຮ່ທາດ; ເປັນຂໍ້ມູນພື້ນຖານ ແລະ ບ່ອນອີງເພື່ອລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາມີທິດຊີ້ນຳ ໃຫ້ມີຄວາມຖືກຕ້ອງ, ວ່ອງໄວ, ທັນການ ແລະ ມີຜົນ

ອ່ານຕໍ່ໜ້າ 3

## ຄະນະກອງທຶນສະພາແຫ່ງຊາດ ປຶກສາຫາລືວຽກງານສຳຄັນຈຳນວນໜຶ່ງ



ໜ້າ 3


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 5





## ຄະນະ...

ທອດປ່ຽນແທນຕໍ່ເນື່ອງໃນສະເພາະໜ້າ ແລະ ຍາວນານ ທັງເພື່ອຍົກສູງຄຸນນະພາບຂອງພະນັກງານ ແລະ ຖັນແຖວພະນັກງານນຳພາ-ຄຸ້ມຄອງ, ປະກອບສ່ວນເຂົ້າໃນການປັບປຸງການເຄື່ອນໄຫວຂອງກົງຈັກການຈັດຕັ້ງແຕ່ລະຂັ້ນໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ສະບັບເລກທີ 032/ກມສພ, ລົງວັນທີ 03 ມັງກອນ 20218; ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກກ່ຽວກັບການຈັດຕັ້ງປະຕິບັດມະຕິກົມການເມືອງສູນກາງພັກ ວ່າດ້ວຍມາດຖານຂອງພະນັກງານ ນຳພາ-ຄຸ້ມຄອງ ສະບັບເລກທີ 292/ຄຈສພ, ລົງວັນທີ 26/4/2018; ເຜີຍແຜ່ແຈ້ງການແນະນຳຂອງຄະນະຈັດຕັ້ງ ສະບັບເລກທີ 158/ຄຈສພ, ລົງວັນທີ 01/10/2021; ມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍມາດຖານຕຳແໜ່ງບໍລິຫານປະເພດ 2,3,4 ແລະ ປະເພດ 5 ພາຍໃນສະພາແຫ່ງຊາດ ສະບັບເລກທີ 087/ຄປຈ, ລົງວັນທີ 18 ພຶດສະພາ 2018 ຈາກກຳມະການສູນກາງພັກ, ກຳມະການຄະນະພັກສະພາແຫ່ງຊາດ ແລະ ຮັບຟັງການເຜີຍແຜ່ມະຕິຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ປະເພດທີ 1 ທີ່ຂຶ້ນກັບສິດຄຸ້ມຄອງຂອງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ສະບັບເລກທີ 13/ຄພ.ສພຊ, ລົງວັນທີ 13/10/2022; ແຜນການສ້າງກຳນົດພະນັກງານນຳພາ-ຄຸ້ມຄອງ ປະເພດທີ 2 ຂຶ້ນກັບສິດຄຸ້ມຄອງຄະນະພັກສະພາແຫ່ງຊາດ ສະບັບເລກທີ 14/ຄພ.ສພຊ, ລົງວັນທີ 14/10/2022; ໃນໂອກາດນີ້, ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຈາກສະຫາຍນາງ ສູນທອນ ໄຊຍະຈັກ ຕື່ມອີກ.

(ສອນສັກ ວັນວິໄຊ)



## ສຳເລັດ...

ທະພົນ (ສ້າງໃໝ່) ແລະ ສະເໜີປັບປຸງກົດໝາຍອີກ 9 ສະບັບຄື: ກົດໝາຍວ່າດ້ວຍທະນາຍຄວາມ (ສະບັບປັບປຸງ), ກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ), ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່ (ສະບັບປັບປຸງ), ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ), ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ (ສະບັບປັບປຸງ), ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ (ສະບັບປັບປຸງ), ກົດໝາຍວ່າດ້ວຍອົງການໄອຍະການທະຫານ (ສະບັບປັບປຸງ), ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ແລະ ກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ).

ປະທານກອງປະຊຸມໄດ້ສະເໜີແນະນຳກ່ຽວກັບການຄົ້ນຄ້ວາ, ປະກອບຄຳເຫັນຕາມຄຳຖາມເຈາະຈີ້ມຂອງຄະນະຮັບຜິດຊອບ; ຫລັງຈາກນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ ແລະ ຄວາມຮັບຜິດຊອບສູງ ເພື່ອເຮັດໃຫ້ບັນດາຮ່າງກົດໝາຍດັ່ງກ່າວມີເນື້ອໃນຄົບຖ້ວນ, ສົມບູນ ແລະ ຖືກກັບສະພາບຄວາມເປັນຈິງຂອງສັງຄົມໃນປັດຈຸບັນ ແລະ ສາມາດນຳເຂົ້າໄປພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX.

(ແສງພອນ ອິນນະລົງ)




## ກອງປະຊຸມ...

ຄັ້ງທີ 2 ໃນຮູບແບບທາງໄກ. ກອງປະຊຸມດັ່ງກ່າວ, ຈັດຂຶ້ນພາຍໃຕ້ການເປັນເຈົ້າພາບຂອງສະພາແຫ່ງຊາດແຫ່ງຣາຊະອານາຈັກກຳປູເຈຍ ໂດຍມີຄະນະຜູ້ແທນເຂົ້າຮ່ວມຈາກສະພາແຫ່ງຊາດ ກຳປູເຈຍ, ບຣູໄນ, ອິນໂດເນເຊຍ, ລາວ, ສິງກະໂປ, ໄທ, ຟີລິບປິນ ແລະ ເລຂາທິການໃຫຍ່ໄອປາ.

ໃນກອງປະຊຸມ, ຄະນະຜູ້ແທນທີ່ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າ, ປຶກສາຫາລື ແລະ ປະກອບຄຳຄິດຄຳເຫັນຢ່າງຝົດຟື້ນ ກ່ຽວກັບຮ່າງມະຕິວ່າດ້ວຍການສົ່ງເສີມການມີສ່ວນຮ່ວມຂອງຊາວໜຸ່ມຕໍ່ຄວາມຍືນຍົງ, ຢືດຢຸ່ນ ແລະ ຮຸ່ງເຮືອງ ຂອງປະຊາຄົມອາຊຽນ. ເນື້ອໃນຮ່າງມະຕິແມ່ນເປັນການສົ່ງເສີມການກໍ່ຕັ້ງ ແລະ ການປະຕິບັດໜ້າທີ່ຂອງກຸ່ມສະມາຊິກລັດຖະສະພາໜຸ່ມໃນອາຊຽນ ເພື່ອໃຫ້ມີຄວາມໃກ້ຊິດກັນຫລາຍຂຶ້ນ ໂດຍຜ່ານການແລກປ່ຽນບົດຮຽນ, ປະສົບການທີ່ດີ, ຄວາມພະຍາຍາມ ແລະ ການສະໜັບສະໜູນເຊິ່ງກັນແລະກັນ ໃນການບັນລຸປະຊາຄົມອາຊຽນ ທີ່ມີຄວາມໜຽວແໜ້ນທາງດ້ານການເມືອງ, ການພັດທະນາເສດຖະກິດ ແລະ ມີຄວາມຮັບຜິດຊອບຕໍ່ສັງຄົມ ເພື່ອຜົນປະໂຫຍດຂອງຄົນຮຸ່ນປັດຈຸບັນ ແລະ ອານາຄົດ ເຊິ່ງຮ່າງມະຕິດັ່ງກ່າວນີ້ ຈະໄດ້ນຳໄປພິຈາລະນາຮ່ວມກັນອີກຄັ້ງໜຶ່ງ ໃນກອງປະຊຸມກຳມາທິການວຽກງານສະມາຊິກລັດຖະສະພາໜຸ່ມໄອປາ ຄັ້ງທີ 1 ທີ່ຈະຈັດຂຶ້ນໃນລະຫວ່າງກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 43 ທີ່ຣາຊະອານາຈັກກຳປູເຈຍ ໃນລະຫວ່າງວັນທີ 20-25 ພະຈິກ 2022 ທີ່ຈະມາເຖິງນີ້.

## ເລື່ອງເດັ່ນ ຂ່າວເດັ່ນ

**# ຄັດໂດຍ: ທອມສະນິດ**

*❑ ປກສ ເມືອງໄຊເສດຖາ ນະຄອນຫລວງວຽງຈັນ ໄດ້ຈັດກຳລັງເຂົ້າໃນງານບຸນນະມັດສະການພະທາດຫລວງວຽງຈັນ ແລະ ງານວາງສະແດງສິນຄ້າ ເຊິ່ງຈະຈັດຂຶ້ນແຕ່ວັນທີ 4-8 ພະຈິກ 2022 ໂດຍໄດ້ແບ່ງອອກເປັນ 14 ຈຸດ ນຳໃຊ້ກຳລັງລົງເຄື່ອນໄຫວທັງໝົດ 100 ກວ່າສະຫາຍ ເພື່ອເຮັດໜ້າທີ່ປ້ອງກັນຄວາມສະຫງົບ-ຄວາມເປັນລະບຽບຮຽບຮ້ອຍພາຍໃນງານ.*

***ນສພ. ວຽງຈັນໃໝ່ 01/11/2022***

*❑ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ (ລນລ) ເຊັນສັນຍາກັບບໍລິສັດ Gaia Petro ຈາກສາທາລະນະລັດເກົາຫລີເພື່ອສ້າງຕັ້ງບໍລິສັດຮ່ວມທຶນ (JVC) ໂດຍໃຊ້ທຶນທັງໝົດ 20 ລ້ານໂດລາ ສ້າງຕັ້ງໂຮງງານຜະລິດນ້ຳມັນ ແອັດຊັງຊີວະພາບ ຫລື ເອຕາໂນນ ສະໜອງໃນ ສປປລາວ ຈະເລີ່ມທ້າຍປີນີ້ ໂດຍຄາດວ່າປີທຳອິດຈະສາມາດສະໜອງນ້ຳມັນໄດ້ປະມານ 10 ລ້ານລິດຕໍ່ເດືອນ ກ່ອນຈະຜະລິດເພີ່ມຂຶ້ນ 20% ຕໍ່ປີ ນັບແຕ່ປີທີ 2 ເປັນຕົ້ນໄປ.*

***ນສພ. ປະຊາຊົນ 03/11/2022***

*❑ ບຸນນະມັດສະການພະທາດຫລວງວຽງຈັນ ປະຈຳປີ 2022 ຈະເລີ່ມເປີດແຕ່ວັນທີ 4-8 ພະຈິກ 2022 ນີ້, ຄະນະຮັບຜິດຊອບໄດ້ມອບໃຫ້ບໍລິສັດເພັດບັນດິດກໍ່ສ້າງ ຈຳກັດສ້າງຜາສາດເຜິ້ງຄູ່ໜຶ່ງທີ່ໃຫຍ່ ແລະ ສູງທີ່ສຸດກວ່າທຸກໆປີທີ່ເຄີຍຈັດມາ, ມີຄວາມສູງປະມານ 3 ແມັດ, ພ້ອມທັງຈະເຮັດໝາກເບັງໃຫຍ່ຄູ່ໜຶ່ງ, ສູງປະມານ 2 ແມັດ ເພື່ອປະກອບສ່ວນເຂົ້າໃນບຸນພະທາດຫລວງວຽງຈັນ ທີ່ຈະຈັດຂຶ້ນໃນປີນີ້ ໃຫ້ມີສີສັນຂຶ້ນກວ່າເກົ່າ. ສຳລັບໃນວັນທີ 7 ພະຈິກ ເວລາ 13:30 ໂມງ ຈະມີພິທີແຫ່ຜາສາດເຜິ້ງ, ໃນວັນທີ 8 ເວລາ 7:00 ໂມງ ຈະມີພິທີຕັກບາດຖວາຍສັງຄະທານ ຮອດເວລາ 13:00 ໂມງ ຈະມີພິທີແຫ່ລູກຄີ ແລະ ແຂ່ງຂັນກິລາພື້ນບ້ານຕີຄີ, ຫລັງຈາກນັ້ນ, ເວລາ 19:00 ໂມງ ຈະມີພິທີວຽນທຽນ ແລະ ຈຸດທູບທຽນ, ບັ້ງໄຟສັກກະລະບູຊາອົງພະທາດຫລວງ.*

***ນສພ. ປະຫດລາວ 03/11/2022***



## ຕີລາຄາ...



ຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການສະເໜີບົດຕີລາຄາຜົນການຕິດຕາມກວດກາຂອງກຳມາທິການບັນດາເຜົ່າຕໍ່ການ ຄຸ້ມຄອງການເຄື່ອນໄຫວຂອງສາສະໜາ ຢູ່ ສປປລາວ; ບົດຕີລາຄາຜົນການຈັດຕັ້ງປະຕິບັດ ດຳລັດ 315/ລບ ວ່າດ້ວຍການຄຸ້ມຄອງການເຄື່ອນໄຫວຂອງສາສະໜາ; ບາງບົດຮຽນໃນການແກ້ໄຂປາກົດການຫຍໍ້ທໍ້ທາງສາສະໜາ ແລະ ຜົນງານການເຄື່ອນໄຫວຂອງອົງການພຸດທະສາສະໜາສຳພັນລາວ ໃນໄລຍະຜ່ານມາ; ນອກນັ້ນ, ຍັງໄດ້ມີການຕີລາຄາ ການຄຸ້ມຄອງ ແລະ ການເຄື່ອນໄຫວສາສະໜາພຸດ ຢູ່ ສປປລາວ ຕາມກົດໝາຍ, ລະບຽບການ, ຫລັກທຳຄຳສອນຂອງສາສະໜາ, ດຳລັດ 315 ແລະ ນິຕິກຳອື່ນໆ; ດ້ານດີ, ຜົນງານ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ໃນການຈັດຕັ້ງປະຕິບັດພາລະບົດບາດຂອງພາກສ່ວນກ່ຽວຂ້ອງຕ່າງໆ ຕໍ່ການຄຸ້ມຄອງການເຄື່ອນໄຫວວຽກງານສາສະໜາ ແລະ ການແກ້ໄຂບັນຫາດັ່ງກ່າວໃນໄລຍະຜ່ານມາ ເຊິ່ງມີກຳມາທິການບັນດາເຜົ່າ ສະພາແຫ່ງຊາດ, ສູນກາງແນວລາວສ້າງຊາດ, ກະຊວງພາຍໃນ, ກົມໃຫຍ່ສັນຕິບານ ກະຊວງປ້ອງກັນຄວາມສະຫງົບ; ທັງນີ້, ກໍເພື່ອຄວາມເປັນເອກະພາບໃນການຄຸ້ມຄອງການເຄື່ອນໄຫວຂອງສາສະໜາ ຢູ່ປະເທດເຮົາ ໃຫ້ນັບມື້ເຂົ້າສູ່ຄວາມເປັນລະບົບລະບຽບຕາມທິດນຳຂອງພັກ ແລະ ລັດ ໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍລະບຽບ ແລະ ກົດໝາຍ, ແນໃສ່ເຕົ້າໂຮມກຳລັງແຮງຂອງທຸກສາສະໜາ ແລະ ສາສະນິກະຊົນຕ່າງໆ ໂດຍສະເພາະແມ່ນພຸດທະສານິກະຊົນທີ່ມີມູນເຊື້ອຜົນງານທີ່ໂດດເດັ່ນ ເຊິ່ງໄດ້ຈາລຶກໄວ້ໃນປະຫວັດສາດຂອງຂະບວນການຕໍ່ສູ້ປົດປ່ອຍຊາດມາແລ້ວນັ້ນ ສືບຕໍ່ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃຫ້ຮັ່ງມີເຂັ້ມແຂງ ສີວິໄລ ແລະ ຍຸຕິທຳ.

(ຂ່າວ: ນາງ ກຸກກິກ ບຸດດາໄຊ; ພາບ: ອານຸສອນ ພູມມີທອນ)



## ສສຊ...

ສຳເລັດຕາມຄາດໝາຍ.

ໃນລະຫວ່າງວັນທີ 26-27 ຕຸລາຜ່ານມານີ້, ທ່ານ ຄຳມ່ວນ ຊົມສີຫາປັນຍາ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ພ້ອມດ້ວຍຄະນະ ໄດ້ປະສານສົມທົບກັບທ່ານ ບີ ເຣີ ຮອງເລຂາທິການສະພາປະຊາຊົນແຂວງໄຊສົມບູນ ແລະ ທ່ານ ນາງ ຄຳຫລ້າ ທອງສີວອນ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະເຂດເລືອກຕັ້ງເມືອງລ້ອງຊານ, ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ພ້ອມດ້ວຍພະນັກງານຊ່ວຍວຽກຈາກສະພາແຫ່ງຊາດ-ສະພາປະຊາຊົນແຂວງໄຊສົມບູນ ໄດ້ເຄື່ອນໄຫວຕິດຕາມ-ກວດກາ ແລະ ຊຸກຍູ້ ການທົດລອງຂຸດຄົ້ນແຮ່ທາດ ຂອງບໍລິສັດຮ່ວມທຸລະກິດ ບໍ່ຄຳທີທີ ໄຊສົມບູນ ຈຳກັດ ແລະ ບໍລິສັດ ໂຊກມະນີ ມາຍນິ້ງ ຈຳກັດ ທີ່ເມືອງລ້ອງແຈ້ງ.

ໃນການເຄື່ອນໄຫວຄັ້ງນີ້, ໄດ້ຕິດຕາມ ກວດກາ ແລະ ຊຸກຍູ້ ການເຄື່ອນໄຫວຈັດຕັ້ງປະຕິບັດບັນດາໂຄງການຈັດຕັ້ງຕ່າງໆ ທີ່ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມ ແຜນງົບປະມານແຫ່ງລັດ 6 ເດືອນທ້າຍປີ 2022 ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມທຸກຍາກ ດ້ານເສດຖະກິດ-ການເງິນ ຕາມມະຕິກອງປະຊຸມສະພາແຫ່ງຊາດ ໂດຍລົງເລິກຕິດຕາມກວດກາ ແລະ ຊຸກຍູ້ການເຮັດທົດລອງຂຸດຄົ້ນແຮ່ຄຳ ແລະ ແຮ່ເຫລັກ ເຊິ່ງຄະນະ ໄດ້ເຮັດວຽກຮ່ວມກັບທ່ານ ໄຊຍະສິດ ລີຊົ້ງດວງພະຈັນ ປະທານກວດກາລັດ ທັງເປັນ ສສຂ ປະຈຳເຂດເລືອກຕັ້ງເມືອງລ້ອງແຈ້ງ ແລະ ໄດ້ຮັບການລາຍງານຫຍໍ້ຈາກທ່ານ ເອກທອງ ຄຳບານໄຊ ຮອງປະທານບໍລິສັດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ໃນການທົດລອງຊອກຂຸດຄົ້ນສຳຫລວດແຮ່ຄຳ ແລະ ແຮ່ເຫລັກ ຂອງບໍລິສັດ ຮ່ວມທຸລະກິດ ບໍ່ຄຳທີທີ ໄຊສົມບູນ ຈຳກັດ ເຊິ່ງບໍລິສັດດັ່ງກ່າວ ໄດ້ຮັບສຳປະທານທົດລອງຂຸດຄົ້ນສຳຫລວດ ໃນເນື້ອທີ່ 1,77 ກິໂລຕາແມັດ ຢູ່ເຂດບ້ານນ້ຳຊານ ໃນປັດຈຸບັນແມ່ນຍັງຢູ່ໃນຊ່ວງສຶກສາສຳຫລວດ, ຂຸດເຈາະ ເກັບຕົວຢ່າງ ແຜນວຽກໃນຕໍ່ໜ້າ ບໍລິສັດຍັງຈະໄດ້ສືບຕໍ່ສຳຫລວດອຸບມົງ, ວາງແຜນເຈາະສຳຫລວດ 5 ຈຸດ, ຂຸດຂຸມສ້າງ 17 ຂຸມ, ຂຸດຄຸມຄອງ 10 ຄອງ, ເດີນສຳຫລວດໜ້າດິນ ຖ້າສຳຫລວດເຫັນສາຍແຮ່ຄິດໄລ່ປະລິມານສະສົມເປັນເສດຖະກິດ ຈະສະເໜີພາກສ່ວນກ່ຽວຂ້ອງຂຸດຄົ້ນ ແລະ ຜະລິດແຮ່, ສືບຕໍ່ສ້າງແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສະຫວັດດີການສັງຄົມ.

ພ້ອມດຽວກັນນັ້ນ, ໄດ້ຮັບຟັງການລາຍງາຍຫຍໍ້ຂອງບໍລິສັດ ໂຊກມະນີ ມາຍນິ້ງ ຈຳກັດ ໂດຍທ່ານ ເພັດ ສີລາພອນ ອຳນວຍການບໍລິສັດ ໃນການຊອກຄົ້ນ ແລະ ສຳຫລວດແຮ່ເຫລັກ ຢູ່ເຂດບ້ານນ້ຳຊານ ເນື້ອທີ່ຂອງການສຳປະທານ 30,32 ກິໂລ ພາຍຫລັງເຊັນສັນຍາແລ້ວ ທາງບໍລິສັດໄດ້ເລີ່ມລົງມືຈັດຕັ້ງປະຕິບັດແຜນການທີ່ວາງໄວ້ ແລະ ສາມາດປະເມີນບໍລິມາດໄດ້ ຈຳນວນໜຶ່ງ ຄາດຄະເນວ່າເປັນເສດຖະກິດ ຕາມການຄາດຄະເນຂອງວິຊາການ ແລະ ຊ່ຽວຊານຂອງບໍລິສັດ ຢູ່ໃນເນື້ອທີ່ເຂດສຳປະທານ ມີບໍລິມາດແຮ່ສະສົມປະມານໜຶ່ງລ້ານກວ່າໂຕນ ມາຮອດປີ 2022 ລັດຖະບານໄດ້ມີນະໂຍບາຍໃໝ່ ໃນການຂຸດຄົ້ນແຮ່ທາດ ໂດຍສະເພາະແມ່ນແຮ່ເຫລັກ ໂດຍອີງຕາມ ດຳລັດ 61 ຂອງລັດຖະບານ ທາງບໍລິສັດຈຶ່ງໄດ້ຂຸດຄົ້ນທົດລອງ 3,2 ກິໂລຕາແມັດ ຢູ່ໃນເຂດສຳປະທານ ແລະ ບໍລິສັດໄດ້ຮັບການເຫັນດີ ຈາກລັດຖະບານ ໃຫ້ຂຸດຄົ້ນທົດລອງ ແລະ ໄດ້ເຊັນສັນຍາກັບ ອົງການປົກຄອງແຂວງໄຊສົມບູນ ໃນວັນ 24 ພຶດສະພາ 2022 ຜ່ານມາ ແລະ ມາຮອດໃນປັດຈຸບັນ, ບໍລິສັດໄດ້ຂາຍແຮ່ອອກຕ່າງປະເທດແລ້ວ ຈຳນວນ 7.000 ກວ່າໂຕນ ແລະ ແຜນການໃນປີ 2023 ຄາດຄະເນວ່າ: ຈະສົ່ງແຮ່ຂາຍອອກຕ່າງປະເທດ ບໍ່ໃຫ້ຫລຸດ 50.000 ກວ່າໂຕນ, ສຳລັບໜ້າວຽກອອກຈາກເຂດຂຸດຄົ້ນທົດລອງແລ້ວ ບໍລິສັດຍັງສືບຕໍ່ສຳຫລວດເນື້ອທີທີ່ເຫລືອ ໃນປັດຈຸບັນນີ້ ກຳລັງກະກຽມລົງມືເຈາະເຮັດທໍລະນີຟີຊິກຕາມມາດຖານສາກົນ ໃນການສຳຫລວດຄາດຈະໃຫ້ສຳເລັດພາຍໃນ 2 ປີ ຂ້າງໜ້າ.

ພາຍຫລັງຮັບຟັງການລາຍງານແລ້ວ, ບັນດາທ່ານ ສສຊ-ສສຂ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມເບິ່ງພາກສະໜາມ ບໍລິສັດ ມາຍນິ້ງ ຈຳກັດ ຢູ່ເຂດບ້ານນ້ຳຊານ.

(ນາງ ອຳໄພພອນ ແກ້ວວິໄລ)

## ສພຊ...

(ສພຊ) ເພື່ອເປັນການຈັດຕັ້ງປະຕິບັດ ດຳລັດ 599/ລບ ໃຫ້ປະສົບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້ ສະພາແຫ່ງຊາດ ຈຶ່ງໄດ້ສົມທົບກັບຄະນະຮັບຜິດຊອບຊຸກຍູ້, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດດຳລັດວ່າດ້ວຍລົດຂອງລັດ ສະບັບເລກທີ 599/ລບ, ລົງວັນທີ 29 ກັນຍາ 2021 ແລະ ເກັບກຳສະຖິຕິລົດຂອງລັດ ໃນຂອບເຂດທົ່ວປະເທດ ເພື່ອຈັດຕັ້ງປະຕິບັດການຕິດແຜ່ນກາໝາຍນຳໃຊ້ສຳລັບລົດຂອງລັດ ສາມາດຈຳແນກ ຕິດຕາມກວດກາ ລົດຂອງລັດທີ່ປະກອບໃຫ້ແຕ່ລະພາກສ່ວນໄດ້ຢ່າງຈະແຈ້ງ.

ໃນວັນທີ 2 ພະຈິກຜ່ານມາ, ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີຕິດແຜ່ນກາໝາຍນຳໃຊ້ລົດບໍລິຫານຂອງລັດຂອງສະພາແຫ່ງຊາດ ໂດຍການເຂົ້າຮ່ວມຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ, ມີຄະນະຮັບຜິດຊອບຊຸກຍູ້ ຕິດຕາມ ກວດກາ ຂັ້ນສູນກາງ ໂດຍມີທ່ານ ນາງ ວຽງຄຳ ພາບວິໄຊ ຮອງຫົວໜ້າກົມບໍລິຫານ-ພິທີການ ແລະ ການເງິນ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ທ່ານ ສົມບູນ ແກ່ນປະເສີດ ຫົວໜ້າພະແນກ ກົມຄຸ້ມຄອງຊັບສິນ ກະຊວງການເງິນ, ທ່ານ ອຸ່ນແກ້ວ ຫລວງສະຫລາດ ຮອງຫົວໜ້າພະແນກ ກົມບໍລິຫານ-ພິທີການ ແລະ ການເງິນ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ທ່ານ ເພັດລຳພັນ ຈັນທະວິໄຊ ຮອງຫົວໜ້າພະແນກ ກົມບໍລິຫານ-ພິທີການ ແລະ ການເງິນ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ທ່ານ ເພັດທອນ ຄຳມີ ວິຊາການກົມຄຸ້ມຄອງຊັບສິນ ກະຊວງການເງິນ ພ້ອມດ້ວຍຄະນະກົມ, ຄະນະພະແນກ, 3 ອົງການຈັດຕັ້ງມະຫາຊົນ ຈາກສະພາແຫ່ງຊາດ ແລະ ພະນັກງານ-ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ການຕິດແຜ່ນກາໝາຍນຳໃຊ້ລົດຂອງລັດໃນຄັ້ງນີ້ ແມ່ນປະຕິບັດຕາມດຳລັດວ່າດ້ວຍລົດຂອງລັດ ສະບັບເລກທີ 599/ລບ, ລົງວັນທີ 29 ກັນຍາ 2021 ເຊິ່ງລົດຂອງລັດແມ່ນຕ້ອງຖືກນຳໃຊ້ເຂົ້າໃນວຽກງານທາງລັດຖະການເທົ່ານັ້ນ, ການນຳໃຊ້ຕ້ອງໃຫ້ຖືກຕ້ອງຕາມເປົ້າໝາຍ, ມີຄວາມໂປ່ງໃສ, ສາມາດກວດສອບໄດ້; ພ້ອມນັ້ນ, ໃນການນຳໃຊ້ແລ້ວທຸກຄັ້ງຕ້ອງໄດ້ຈອດໄວ້ບ່ອນຈອດສະເພາະຢູ່ສຳນັກງານຂອງຂະແໜງການຕົນທີ່ໄດ້ກຳນົດໄວ້ຢ່າງເຂັ້ມງວດ ພ້ອມທັງມີການຄຸ້ມຄອງປົກປັກຮັກສາຢ່າງຖືກຕ້ອງ ເພື່ອໃຫ້ຮັບປະກັນການເຄື່ອນໄຫວວຽກງານລວມ ແລະ ວຽກງານວິຊາສະເພາະຂອງແຕ່ລະພາກສ່ວນ; ການຈັດພິມ ແລະ ຕິດແຜ່ນກາໝາຍນຳໃຊ້ລົດຂອງລັດ QR code ແມ່ນຕ້ອງໄດ້ບັນທຶກຂໍ້ມູນເຂົ້າໃນລະບົບໂປຣແກມຄຸ້ມຄອງຂໍ້ມູນຊັບສິນຂອງລັດ AMIS ເຊິ່ງສາມາດກວດກາໄດ້ໂດຍຜ່ານການສະແກນ QR code ຖ້າຫາກລົດຄັນໃດທີ່ຕິດປ້າຍທະບຽນລັດບໍລິຫານ ຫາກບໍ່ມີ QR code ແມ່ນໃຫ້ຖອນຄືນການນຳໃຊ້ ຫລື ແກ້ໄຂຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

ໃນພິທີຄັ້ງນີ້, ມີລົດບໍລິຫານຂອງສະພາແຫ່ງຊາດ ຈຳນວນ 46 ຄັນ ທີ່ຕິດແຜ່ນກາໝາຍ.

## ປຶກສາ...

(ສພຊ) ກອງປະຊຸມປຶກສາຫາລືການກະກຽມຕັ້ງກອງບຸນເຖິງອາດີດການນຳສະພາແຫ່ງຊາດ ໄດ້ຈັດຂຶ້ນໃນວັນທີ 3 ພະຈິກ 2022 ໂດຍການເປັນປະທານຂອງທ່ານ ນາງ ມະນີວັນ ເຍຍປາວເຮີ ຮອງປະທານກອງທຶນຊ່ວຍເຫລືອສັງຄົມຂອງສະພາແຫ່ງຊາດ, ມີບັນດາທ່ານກຳມະການ ແລະ ຜູ້ຊ່ວຍວຽກໃນຄະນະກອງທຶນດັ່ງກ່າວເຂົ້າຮ່ວມ.

ທັງນີ້, ເພື່ອປຶກສາຫາຫາລື, ການກະກຽມ ແລະ ແບ່ງຄວາມຮັບຜິດຊອບລະຫວ່າງພາກສ່ວນຂອງກອງທຶນຊ່ວຍເຫລືອສັງຄົມ ສະພາແຫ່ງຊາດ, ຄະນະພະສົງ ແລະ ພາກສ່ວນສູນກາງແນວລາວສ້າງຊາດ ເພື່ອກະກຽມໃຫ້ແກ່ການກະກຽມຈັດຕັ້ງກອງບຸນ ເພື່ອລະນຶກເຖິງບຸນຄຸນຂອງອາດີດການນຳຂອງສະພາແຫ່ງຊາດ ທີ່ເສຍຊີວິດໄປແລ້ວນັ້ນ.

ໃນກອງປະຊຸມ, ໄດ້ພ້ອມກັນປຶກສາຫາລືການກະກຽມງານຕັ້ງກອງບຸນເຖິງອາດີດການນຳຂອງສະພາແຫ່ງຊາດ ເປັນຕົ້ນແມ່ນດ້ານການກະກຽມກອງບຸນ, ເຄື່ອງກອງບຸນ, ການຕ້ອນຮັບບັນດາແຂກທີ່ຈະເຂົ້າຮ່ວມໃນພິທີ, ການຈັດວາງສະຖານທີ່, ສິ່ງອຳນວຍຄວາມສະດວກຕ່າງໆ ແລະ ການຖອດຖອນບົດຮຽນທາງດ້ານການຊ່ວຍເຫລືອສັງຄົມ ຈາກບັນດາຄອບຄົວຄະນະນຳແຂວງຫລວງນ້ຳທາຕື່ມອີກ.

(ນາງ ກຸກກິກ ບຸດດາໄຊ)

## ເບີໂທສຸກເສີນ

**໐ ຕຳຫລວດ**

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນ ແລະຕ້ານການຄ້າ ມະນຸດ 021 970543

# ສຳເລັດການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ປີ 2022



(ສພຊ) ວັນທີ 28 ຕຸລາ 2022 ສະພາປະຊາຊົນແຂວງຫົວພັນ ໄດ້ຈັດກອງປະຊຸມປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ປະຈຳປີ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫົວພັນ ໂດຍການເປັນປະທານຂອງທ່ານ ສົມສັກ ດອນຈານິດ ຮອງປະທານສະພາປະຊາຊົນແຂວງ; ມີຄະນະປະຈຳ, ຄະນະເລຂາທິການ, ຜູ້ຕາງໜ້າຈາກຄະນະຈັດຕັ້ງແຂວງ, ອົງການກວດກາລັດແຂວງ, ພະແນກພາຍໃນແຂວງ ຕະຫລອດຮອດພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມດັ່ງກ່າວ, ໄດ້ຮັບຟັງຮ່າງບົດສະຫລຸບຕີລາຄາຄືນການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງສະພາປະຊາຊົນແຂວງ ພ້ອມທັງເຊື່ອມຊຶມເອກະສານສຳຄັນ ເປັນຕົ້ນແມ່ນຄຳແນະນຳການຈັດຕັ້ງປະຕິບັດດຳລັດວ່າດ້ວຍການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ສະບັບເລກທີ 06/ພນ, ລົງວັນທີ 2 ພຶດສະພາ 2018 ແລະ ຄູ່ມືແນະນຳການຈັດຕັ້ງການປະຕິບັດການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ສະບັບເລກທີ 01/ປພລ, ລົງວັນທີ 29 ສິງຫາ 2018. ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ພ້ອມກັນປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫລຸບດັ່ງກ່າວ ໃຫ້ມີເນື້ອໃນຄົບຖ້ວນ ແລະ ສາມາດຈັດຕັ້ງປະຕິບັດໄດ້. ຈາກນັ້ນ, ພະນັກງານ-ລັດຖະກອນທຸກຄົນ ໄດ້ພ້ອມກັນປະເມີນຕົນເອງ ແລະ ເພື່ອນຮ່ວມງານຕາມມາດຖານເງື່ອນໄຂຂອງການປະເມີນ; ເພື່ອເປັນການສັງເກດຕີລາຄາດ້ານດີ ຜົນງານ, ດ້ານອ່ອນຄົງຄ້າງຂອງພະນັກງານ-ລັດຖະກອນ ແຕ່ລະຄົນ, ພ້ອມທັງປະກອບຄຳຄິດຄຳເຫັນ, ຕຳນິສິ່ງຂ່າວ, ກໍ່ສ້າງເຊິ່ງກັນ ແລະ ກັນສະພາປະຊາຊົນແຂວງຫົວພັນ ມີພະນັກງານ-ລັດຖະກອນທັງໝົດ 52 ຄົນ, ຍິງ 19 ຄົນ ໃນນີ້ມີໜ້າ ປະເມີນຕົວຈິງ 41 ຄົນ ຍິງ 17 ຄົນຜ່ານການປະເມີນ ມີປະເພດດີເລີດ ແລະ ດີ; ປະເພດກາງ ແລະ ອ່ອນແມ່ນບໍ່ມີ.

ຕອນທ້າຍ, ທ່ານ ສົມສັກ ດອນຈານິດ ໄດ້ມີຄຳຄິດຄຳເຫັນໂອ້ລົມ ທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານການເຄື່ອນໄຫວວຽກງານໄລຍະໜຶ່ງປີຜ່ານມາ ຂອງພະນັກງານ-ລັດຖະກອນ ສະພາປະຊາຊົນແຂວງ ຍາດມາໄດ້ ແລະ ເນັ້ນໜັກໃຫ້ບັນດາທ່ານຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຈົ່ງຖືເອົາວຽກງານສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານ-ລັດຖະກອນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນເອງເປັນກົກ ທັງເປັນປົກກະຕິຕໍ່ເນື່ອງ ແລະ ຮຽກຮ້ອງໃຫ້ພະນັກງານ-ລັດຖະກອນເອົາໃຈໃສ່ຄົ້ນຄວ້າຮ່ຳຮຽນ, ເຊື່ອມຊຶມແນວທາງຂອງພັກ-ລັດ, ຮູ້ຈຳແນກມິດ ແລະ ສັດຕູຢ່າງຈະແຈ້ງ, ມີຄວາມອຸ່ນອຽນທຸ່ນທ່ຽງ, ປຸ້ມລຸມສາມັກຄີ ເປັນເອກະພາບກັນພາຍໃນ, ຮັກແພງຊ່ວຍເຫລືອເຊິ່ງກັນ ແລະ ກັນ ສືບຕໍ່ເຝິກຝົນຫລໍ່ຫລອມທາງດ້ານຄຸນສົມບັດ, ສົນທຳປະຕິບັດ, ຕັ້ງໜ້າປະຕິບັດແບບແຜນວິທີການເຮັດວຽກ ປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ປະສົບຜົນສຳເລັດ ແລະ ພ້ອມກັນຕີຖອຍບັນຫາຈຸດອ່ອນຂໍ້ຄົງຄ້າງໃຫ້ໝົດໄປເທື່ອເທື່ອລະກ້າວ.

(ສພຂ ຫົວພັນ)

# ສພຂ ຫລວງພະບາງ ເຄື່ອນໄຫວເຮັດຢູ່ພະແນກກະສິກຳ ແລະ ປ່າໄມ້ແຂວງ



(ສພຊ) ໂດຍປະຕິບັດຕາມຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ, ເລກທີ 05/ຄປຈ, ລົງວັນທີ 28 ກໍລະກົດ 2022 ກ່ຽວກັບການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX; ໃນຕອນເຊົ້າຂອງວັນທີ 2 ພະຈິກ 2022 ຢູ່ທີ່ຫ້ອງປະຊຸມພະແນກກະສິກຳ ແລະ ປ່າໄມ້ແຂວງ, ທ່ານ ສົມພອນ ສີອຸດົມພັນ ກຳມະການພັກແຂວງ, ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6, ຮອງປະທານສະພາປະຊາຊົນແຂວງ, ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ໄດ້ລົງໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຕິດພັນກັບຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II ທີ່ໄດ້ພິຈາລະນາ ແລະ ຮັບຮອງເອົາຫລາຍບັນຫາທີ່ສຳຄັນຂອງສູນກາງ ແລະ ຂອງທ້ອງຖິ່ນ, ເພື່ອເຮັດໃຫ້ຖັນແຖວພະນັກງານ-ລັດຖະກອນ ໄດ້ຮັບຮູ້ເນື້ອໃນຈິດໃຈຜົນສຳເລັດຂອງກອງປະຊຸມ ຢ່າງກ້ວາງຂວາງ. ພ້ອມດຽວກັນນີ້, ຍັງໄດ້ລົງນາມເຊັນບົດບັນທຶກການປະສານງານລະຫວ່າງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ກັບຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ, ມີບັນດາຄະນະປະຈຳ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ລັດຖະກອນ ຂອງສອງພາກສ່ວນ ເຂົ້າຮ່ວມເປັນສັກຂີພິຍານ.

ການລົງນາມເຊັນບົດບັນທຶກການປະສານງານໃນຄັ້ງນີ້ ເພື່ອເປັນພື້ນຖານ, ບ່ອນອີງ ແລະ ເປັນໃຈກາງໃນການປະສານງານອຳນວຍຄວາມສະດວກໃນການເຄື່ອນໄຫວວຽກງານຂອງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນກັບພະແນກກະສິກຳ ແລະ ປ່າໄມ້ແຂວງ ໃນການຈັດຕັ້ງປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນໃຫ້ມີປະສິດທິພາບ, ປະສິດທິຜົນ, ວ່ອງໄວ ແລະ ຮັດກຸມ ພ້ອມທັງເພີ່ມທະວີພາລະບົດບາດໃນການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ. ນອກນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ບັນດາຄະນະປະຈຳ, ພະນັກງານ-ລັດຖະກອນ ພາຍໃນພະແນກຈົ່ງຍົກສູງຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານວິຊາສະເພາະຂອງຕົນໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.

(ນາງ ຄຳຫລ້າ ພອນພິລາ)

# ປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບຢູ່ແຂວງຫລວງນ້ຳທາ



(ສພຊ) ໃນຕອນເຊົ້າວັນທີ 3 ພະຈິກ 2022 ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ຂອງສະພາປະຊາຊົນແຂວງຫລວງນ້ຳທາ ໄດ້ເປີດກອງປະຊຸມປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 4 ສະບັບ ທີ່ຫ້ອງປະຊຸມໃຫຍ່ຂອງສະພາປະຊາຊົນແຂວງຫລວງນ້ຳທາ ພາຍໃຕ້ການເປັນປະທານຂອງທ່ານ ຈັນທະສຸລິນ ໝັ້ນປະດິດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ; ເຂົ້າຮ່ວມມີສະມາຊິກສະພາປະຊາຊົນແຂວງ, ປະທານ-ຮອງປະທານສານປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າອົງການໄອຍະການ, ພະແນກຍຸຕິທຳແຂວງ, ສອງກອງບັນຊາການ ປກຊ-ປກສ ແຂວງ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ 28 ຄົນ ຍິງ 5 ຄົນ.

ກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບຜົນການປະເມີນການຈັດຕັ້ງປະຕິບັດກົດໝາຍຈຳນວນ 4 ສະບັບຄື: ກົດໝາຍວ່າດ້ວຍສານປະຊາຊົນ; ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ; ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຕາມຄຳຖາມເຈາະຈີ້ມຂອງກຳມາທິການຍຸຕິທຳ ຂອງສະພາແຫ່ງຊາດ ເປັນຕົ້ນແມ່ນການຈັດຕັ້ງເຜີຍແຜ່, ໂຄສະນາກົດໝາຍທັງ 4 ສະບັບ ກວ້າງຂວາງທົ່ວເຖິງແລ້ວບໍ່, ໄດ້ຜັນຂະຫຍາຍເນື້ອໃນມາດຕາຂອງກົດໝາຍອອກເປັນນິຕິກຳໃຕ້ກົດໝາຍຈັກສະບັບ ແລະ ຜ່ານການຈັດຕັ້ງປະຕິບັດນິຕິກຳດັ່ງກ່າວມີຄວາມສອດຄ່ອງກັບຕົວຈິງ ແລະ ກົດໝາຍຫລືບໍ່, ມີມາດຕາໃດການກຳນົດຍັງບໍ່ສອດຄ່ອງ, ຄົບຖ້ວນ ແລະ ຂັດກັບກົດໝາຍ, ນິຕິກຳອື່ນທີ່ຈຳເປັນຕ້ອງປັບປຸງ ແລະ ການຈັດຕັ້ງປະຕິບັດມີຜົນສຳເລັດຕົວຈິງ, ດ້ານດີ, ດ້ານອ່ອນ.

ພ້ອມດຽວກັນ, ຜູ້ແທນກອງປະຊຸມໄດ້ມີການສະເໜີ, ແລກປ່ຽນປະກອບຄຳຄິດເຫັນຕໍ່ກົດໝາຍໃນຂົງເຂດຍຸຕິທຳ ຢ່າງມີຈຸດສຸມກົງໄປກົງມາ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດຍຸຕິທຳມີຄວາມຖືກຕ້ອງສອດຄ່ອງກັບສະພາບຕົວຈິງ ແລະ ຮັບປະກັນຄຸນນະພາບສູງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ ແລະ ຄຳສະເໜີດັ່ງກ່າວ ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ຂອງສະພາປະຊາຊົນແຂວງ ຈະສັງລວມແລ້ວ ນຳສະເໜີຫາກຳມາທິການຍຸຕິທຳຂອງສະພາແຫ່ງຊາດທີ່ຈະເປັນຂໍ້ມູນນຳເຂົ້າຄົ້ນຄວ້າໃນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດທີ່ຈະໄຂຂຶ້ນໃນຕໍ່ໜ້າ ເພື່ອຄົ້ນຄວ້າ, ແກ້ໄຂຕາມສະພາບຄວາມເປັນຈິງຂອງທ້ອງຖິ່ນ.

(ນັກຂ່າວ ສພຂ ຫລວງນ້ຳທາ)

# ຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ



(ສພຊ) ໃນຕອນເຊົ້າຂອງວັນທີ 18 ຕຸລາ 2022 ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງຈຳປາສັກ ໄດ້ເປີດກອງປະຊຸມຮ່ວມກັບຫລາຍພາກສ່ວນ ເພື່ອຄົ້ນຄວ້າແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ແລະ ບັນຫາຂໍ້ຂັດແຍ່ງ ທີ່ສະເໜີຕໍ່ສະພາປະຊາຊົນແຂວງຈຳປາສັກ ໂດຍການເປັນປະທານຂອງ ທ່ານ ແກ້ວລັດຕະນະ ສີຫາວົງ ຄະນະປະຈຳພັກແຂວງ, ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ ມີທ່ານ ປອ. ສຸກສະຫວັນ ວິໄລວົງ ຄະນະປະຈຳພັກແຂວງ, ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ, ທ່ານ ປອ. ສົມສັກ ແສງສັກດາ ຄະນະປະຈຳສະພາປະຊາຊົນແຂວງ, ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ແລະ ບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການ, ຕາງໜ້າຈາກພະແນກການ-ກົມກອງອ້ອມຂ້າງແຂວງ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ພາຍຫລັງປະທານກອງປະຊຸມໄດ້ມີຄຳເຫັນ ແລະ ກ່າວຈຸດປະສົງຂອງການດຳເນີນກອງປະຊຸມ, ກອງປະຊຸມໄດ້ຮັບຟັງການຜ່ານເນື້ອໃນຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ຈຳນວນ 6 ເລື່ອງ, ຮັບຟັງການຊີ້ແຈງ ແລະ ລາຍງານກ່ຽວ (ກັບການແກ້ໄຂບັນຫາດັ່ງກ່າວໃນໄລຍະຜ່ານມາ ຈາກບັນດາພະແນກການ-ກົມກອງ. ຈາກນັ້ນ, ບັນທ່ານຜູ້ແທນກອງປະຊຸມໄດ້ຜັດປ່ຽນກັນປະກອບຄຳຄິດເຫັນຕໍ່ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ແລະ ຂໍ້ຂັດແຍ່ງຈຳນວນດັ່ງກ່າວ ທີ່ນຳມາຄົ້ນຄວ້າປຶກສາຫາລືແກ້ໄຂໃນກອງປະຊຸມ ຢ່າງກົງໄປກົງມາ ແນໃສ່ເພື່ອແກ້ໄຂບັນຫາໃຫ້ມີຄວາມຖືກຕ້ອງກັບ

ອ່ານຕໍ່ໜ້າ 3

# ສືບຕໍ່ຕິດຕາມກວດກາ ແລະ ຊຸກຍູ້ວຽກງານ ຂົງເຂດກະສິກຳ ແລະ ປ່າໄມ້ ນະຄອນຫລວງວຽງຈັນ



(ສພຊ) ວັນທີ 1 ພະຈິກ 2022 ທ່ານ ສົມບັດ ຈັນທະມາດ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ພ້ອມດ້ວຍຄະນະ ສືບຕໍ່ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປະຈຳປີ 2022 ຢູ່ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫລວງວຽງຈັນ (ນວ) ໂດຍການຕ້ອນຮັບຂອງທ່ານ ແສງອາລຸນ ສຸລິຍະວົງ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ນວ ແລະ ມີບັນດາຫົວໜ້າ-ຮອງຫົວໜ້າຂະແໜງການຂອງພະແນກ ແລະ ຫົວໜ້າຫ້ອງການ 9 ເມືອງທົ່ວ ນວ ເຂົ້າຮ່ວມ.

ໃນການເຄື່ອນໄຫວເຮັດວຽກຄັ້ງນີ້, ທ່ານ ແສງອາລຸນ ສຸລິຍະວົງ ໄດ້ລາຍງານໃຫ້ຮູ້ວ່າ: ໃນໄລຍະ 9 ເດືອນຜ່ານມາ ພະແນກກະສິກຳ ແລະ ປ່າໄມ້ ນວ ໄດ້ສຸມໃສ່ຈັດຕັ້ງປະຕິບັດ 2 ແຜນງານທີ່ລັດຖະບານວາງອອກ, ໃນນັ້ນ ແຜນການຄ້ຳປະກັນສະບຽງອາຫານ ສາມາດສະໜອງສະບຽງອາຫານປະເພດເຂົ້າ, ພືດຜັກ, ໝາກໄມ້ ແລະ ສະໜອງທາດຊີ້ນໄດ້ພຽງພໍ ແລະ ມີສ່ວນແຮໄວ້ຈຳນວນໜຶ່ງ, ການຟື້ນຟູສ້ອມແປງໃສ່ບັນດາໂຄງການຊົນລະປະທານທີ່ມີທ່າແຮງໃນການຜະລິດກະກະສິກຳມີຜົນຕອບແທນທາງດ້ານເສດຖະກິດສູງ ຈຳນວນ 28 ໂຄງການ, ກໍ່ສ້າງສ້ອມແປງສຳເລັດແລ້ວ 16 ໂຄງການ, ໄດ້ຊຸກຍູ້ຊາວກະສິກອນໄຖກົບຕໍເຟືອງເພື່ອປັບປຸງບຳລຸງດິນ ປະຕິບັດໄດ້ 91,14% ຂອງເນື້ອທີ່ແຜນການ 67.817 ເຮັກຕາ ແລະ ໄດ້ປະຕິຮູບນາໄຮ່ນ້ອຍເປັນນາໄຮ່ໃຫຍ່ ຢູ່ 5 ເມືອງນອກ ໄດ້ 70 ເຮັກຕາ. ແຜນງານຜະລິດສິນຄ້າ ຜ່ານມາໄດ້ຈັດຕັ້ງປະຕິບັດຜະລິດເປັນສິນຄ້າ ເຮັດໃຫ້ມີການສົ່ງອອກສິນຄ້າກະສິກຳ ໄປຕ່າງປະເທດໃນໄລຍະ 9 ເດືອນ ໄດ້ 47.702 ໂຕນ, ລວມມູນຄ່າ 21.081.025 ໂດລາສະຫະລັດ, ໃນນັ້ນ ມີເຂົ້າສານ 990 ໂຕນ ມູນຄ່າ 548.000 ໂດລາ, ພືດ ແລະ ຜະລິດຕະພັນພືດ 17.568 ໂຕນ ມູນຄ່າ 11.959.000 ໂດລາ, ປະເພດໄມ້ 13.707 ໂຕນ ມູນຄ່າ 2.903.588 ໂດລາ, ປະເພດແປ້ງມັນຕົ້ນ 10.893 ໂຕນ ມູນຄ່າ 3.740.000 ໂດລາ ແລະ ປະເພດເຄື່ອງປ່າຂອງດົງຈຳນວນໜຶ່ງ.

ນອກຈາກນັ້ນ, ໃນປັດຈຸບັນ ແມ່ນໄດ້ສ້າງຕັ້ງກຸ່ມການຜະລິດໄດ້ 139 ກຸ່ມ, ໃນນັ້ນ ກຸ່ມກະສິກຳອິນຊີ 12 ກຸ່ມ, ກຸ່ມກະສິກຳສະອາດ 67 ກຸ່ມ, ກຸ່ມຜະລິດເຂົ້າແນວພັນລຸ້ນ 3 ມີ 16 ກຸ່ມ, ກຸ່ມປູກມັນຕົ້ນ 16 ກຸ່ມ, ກຸ່ມປູກສາລີ 1 ກຸ່ມ, ກຸ່ມລ້ຽງສັດ 12 ກຸ່ມ, ກຸ່ມບໍລິຫານກົນຈັກ 1 ກຸ່ມ ແລະ ໄດ້ມີການສ້າງຕັ້ງກອງທຶນກຸ່ມ ແລະ ບໍລິຫານພາຍໃຕ້ທຶນຂອງໂຄງການຜະລິດກະສິກຳເປັນສິນຄ້າ, ໂຄງການ CLEAN ແລະ ໂຄງການສົ່ງເສີມລະບົບຕ່ອງໂສ້ການຜະລິດການຜະລິດກະສິກຳເປັນສິນຄ້າທີ່ເປັນມິດຕໍ່ສິ່ງແວດລ້ອມ.

(ນັກຂ່າວ ສປນວ)

# ກອງປະຊຸມຕິດຕາມກວດກາ, ປະເມີນ 4 ກົດໝາຍ ໃນຂົງເຂດຍຸຕິທຳ



(ສພຊ) ໃນຕອນເຊົ້າວັນທີ 27 ຕຸລາ 2022 ສະພາປະຊາຊົນແຂວງຫົວພັນ ໄດ້ຈັດກອງປະຊຸມຕິດຕາມກວດກາຜົນການປະເມີນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດຍຸຕິທຳ ຈຳນວນ 4 ສະບັບຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ທີ່ຫ້ອງປະຊຸມຄະນະປະຈຳສະພາປະຊາຊົນແຂວງຫົວພັນ ໂດຍການເປັນປະທານຂອງທ່ານ ສົມສັກ ດອນຈານິດ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ເລຂາທິການສະພາປະຊາຊົນແຂວງ, ບັນດາທ່ານຕາງໜ້າຈາກອົງການກວດກາລັດແຂວງ, ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ອົງການໄອຍະການແຂວງ, ອົງການໄອຍະການເຂດ1, ສານປະຊາຊົນແຂວງ, ສານເຂດ 1, ຫ້ອງວ່າການແຂວງ, ພະແນກຍຸຕິທຳ ແລະ ພະນັກງານວິຊາການຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນກອງປະຊຸມ, ໄດ້ຮັບຟັງການລາຍງານຂອງພາກສ່ວນກ່ຽວຂ້ອງ ເປັນຕົ້ນແມ່ນຮັບຟັງການລາຍງານການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສານປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຈາກທ່ານ ພົມແພງ ສີວິໄລທອງ ຮອງປະທານສານປະຊາຊົນແຂວງຫົວພັນ ແລະ ຮັບຟັງການລາຍງານການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຈາກທ່ານ ພິລາວົງ ເພັງພະຈັນ ຮອງຫົວໜ້າອົງການໄອຍະການປະຊາຊົນແຂວງຫົວພັນ.

ນອກນັ້ນ, ໃນກອງປະຊຸມຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດຄຳເຫັນ ຕາມຄຳຖາມເຈາະຈີ້ມ ແລະ ຕາມການຈັດຕັ້ງປະຕິບັດບັນດາກົດໝາຍດັ່ງກ່າວໃນໄລຍະຜ່ານມາຢ່າງມີຈຸດສຸມ ການປະເມີນຄັ້ງນີ້ ເພື່ອເປັນຂໍ້ມູນ ແລະ ເປັນບ່ອນອີງໃນການນຳສະເໜີຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ສະພາແຫ່ງຊາດ ເພື່ອປັບປຸງບາງໝວດ, ບາງມາດຕາໃສ່ກົດໝາຍຈຳນວນ 4 ສະບັບ ໃນຂົງເຂດຍຸຕິທຳໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງຢູ່ຂັ້ນທ້ອງຖິ່ນໃຫ້ນັບມື້ນັບດີຂຶ້ນເລື້ອຍໆ.

(ນັກຂ່າວ ສພຊ ຫົວພັນ)

# ສພຊ ເຊກອງ ປະເມີນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດຍຸຕິທຳ ຈຳນວນ 4 ສະບັບ



(ສພຊ) ໂດຍປະຕິບັດຕາມແຈ້ງການຂອງຄະນະເລຂາທິການ ສະພາແຫ່ງຊາດ ສະບັບເລກທີ 483/ຄລສ.ຍທ, ລົງວັນທີ 17/10/2022 ໃຫ້ບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍ; ວັນທີ 24 ຕຸລາ 2022 ທີ່ສະໂມສອນສະພາປະຊາຊົນ (ສພຊ) ເຊກອງ ໄດ້ຈັດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 4 ສະບັບ ປີ 2022 ຄື: ກົດໝາຍວ່າດ້ວຍສານປະຊາຊົນແຂວງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໂດຍການເປັນປະທານຂອງທ່ານ ດົງເພັດ ພະຍົນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ປອ. ແພງສີ ສີລາວີ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ບັນດາຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ຄະນະກຳມະການ, ພະແນກການ ພ້ອມດ້ວຍຂະແໜງການທີ່ກ່ຽວຂ້ອງ.

ກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບຜົນການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຈາກອົງການທີ່ກ່ຽວຂ້ອງ. ຈາກນັ້ນ, ບັນດາຜູ້ແທນກອງປະຊຸມກໍໄດ້ຜັດປ່ຽນກັນປະກອບຄຳຄິດ, ຄຳເຫັນ ຕາມຄຳຖາມເຈາະຈີ້ມຂອງທ່ານປະທານກອງປະຊຸມ ຕໍ່ອັນລວມ ແລະ ອັນສະເພາະການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 4 ສະບັບ ໃນຂັ້ນທ້ອງຖິ່ນຂອງຕົນ ເພື່ອເປັນຂໍ້ມູນສັງລວມເຂົ້າໃສ່ບົດລາຍງານຜົນການຕິດຕາມກວດກາການປະເມີນການການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳເພື່ອທີ່ຈະນຳສະເໜີຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄດ້ໄຂຂຶ້ນໃນມໍ່ໆນີ້.

ໂອກາດດັ່ງກ່າວ, ທ່ານ ດົງເພັດ ພະຍົນ ໄດ້ໂອ້ລົມຕໍ່ກອງປະຊຸມ ເພື່ອຮັບປະກັນການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບໃຫ້ມີປະສິດທິພາບ, ເອົາໃຈໃສ່ຕິດຕາມກວດກາ ແລະ ຊຸກຍູ້ບັນດາພະແນກການກ່ຽວຂ້ອງປະຕິບັດໜ້າທີ່ວຽກງານຂອງຕົນຕາມກົດໝາຍ, ນິຕິກຳໃຕ້ກົດໝາຍຢ່າງເຂັ້ມງວດ. ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງ ເພີ່ມທະວີການຈັດຕັ້ງປະຕິບັດວຽກງານໃຫ້ມີຄວາມສອດຄ່ອງກັບສະພາບເງື່ອນໄຂຕົວຈິງ, ວ່ອງໄວ ແລະ ສອດຄ່ອງກັບກົດໝາຍ ຕິດພັນກັບການປະສານງານເຊິ່ງກັນແລະກັນ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ວຽກງານຂອງແຕ່ລະພາກສ່ວນ, ໃຫ້ມີຄຸນນະພາບ, ສອດຄ່ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຕາມກົດໝາຍກຳນົດໄວ້, ເອົາໃຈໃສ່ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃຫ້ໄດ້ຢ່າງກວ້າງຂວາງທົ່ວເຖິງ.

(ມາລີວັນ)

## ຄົ້ນຄວ້າເຄົ່າເຣື່ອງ...

ຄວາມເປັນຈິງໂດຍຖືເອົາລະບຽບກົດໝາຍເປັນບ່ອນອີງ.

ຕອນທ້າຍຂອງກອງປະຊຸມ, ທ່ານ ແກ້ວລັດຕະນະ ສີຫາວົງ ປະທານກອງປະຊຸມ ໄດ້ມີຄຳເຫັນສະຫລຸບສັງລວມບັນຫາ ແລະ ໃຫ້ທິດຊີ້ນຳຕໍ່ກອງປະຊຸມວ່າ: ໃຫ້ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ຂອງສະພາປະຊາຊົນແຂວງ ປະສານສົມທົບກັບພາກສ່ວນທີ່ຂ້ອງ ໃນການຕິດຕາມກວດການແກ້ໄຂບັນຫາ ແລະ ມອບໃຫ້ບັນດາພະແນກການ-ກົມກອງ ຈົ່ງພ້ອມກັນເພີ່ມທະວີຄວາມສາມາດໃນການຄົ້ນຄວ້າ, ເກັບກຳຂໍ້ມູນ ແລະ ວິເຄາະບັນຫາຢ່າງລະອຽດເລິກເຊິ່ງ ເພື່ອແກ້ໄຂບັນຫາດັ່ງກ່າວໃຫ້ສຳເລັດ ແລະ ຮັບປະກັນຄວາມຍຸຕິທຳ, ຄວາມຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ ແລະ ພາຍຫລັງສຳເລັດໃຫ້ລາຍງານຄືນຕໍ່ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ກໍຄືຄະນະປະຈຳສະພາປະຊາຊົນແຂວງຈຳປາສັກ.

(ສົມວິຈິດ ໄຊມົນຕີ)



**108 ສາລະ**

# ພອນສະຫວັນ

# ຜູ້ອື່ນ



ພອນສະຫວັນ ເປັນຄວາມສາມາດ ຫລື ຄວາມຖະນັດ ສະເພາະຂອງບຸກຄົນ ທີ່ເຮັດໃຫ້ບຸກຄົນນັ້ນມີຄວາມໂດດເດັ່ນທົ່ວໄປ ບາງຄົນເຊື່ອວ່າພອນສະຫວັນເປັນຄວາມສາມາດພິເສດທີ່ຕິດຕົວມາຕັ້ງແຕ່ກຳເນີດ ແຕ່ບາງຄົນເຊື່ອວ່າພອນສະຫວັນເປັນສິ່ງທີ່ສາມາດເຝິກຝົນໄດ້ ແລະ ເມື່ອເຝິກຝົນເລື້ອຍໆຈົນເກີດຄວາມຊຳນານແລ້ວ ກໍສາມາດພັດທະນາຄວາມສາມາດນັ້ນໃຫ້ໂດດເດັ່ນຂຶ້ນມາໄດ້.

ດຣ. ໂຮວາດ ກາດເນີ (Howard Gardner) ນັກຈິດຕະວິທະຍາ ມະຫາວິທະຍາໄລຮາວາດເປັນຜູ້ທີ່ພະຍາຍາມໃຫ້ເຫັນເຖິງຄວາມສາມາດທີ່ຫລາກຫລາຍ ໂດຍທ່ານໄດ້ນຳສະເໜີວ່າ: ພອນສະຫວັນຂອງຄົນມີຫລາຍດ້ານທີ່ແຕກຕ່າງກັນ ແຕ່ມີຄວາມສຳຄັນເທົ່າທຽມກັນ ຂຶ້ນຢູ່ກັບວ່າແຕ່ລະຄົນຈະໂດດເດັ່ນດ້ານໃດ ເຊິ່ງເປັນລັກສະນະສະເພາະຕົວຂອງແຕ່ລະຄົນ; ພອນສະຫວັນຕາມທິດສະດີຂອງ ດຣ. ໂຮວາດ ກາດເນີ ນັ້ນແບ່ງອອກເປັນ 8 ດ້ານຄື:

- ພອນສະຫວັນດ້ານພາສາ (Linguistic Intelligence): ເປັນຄວາມສາມາດຮັບຮູ້, ເຂົ້າໃຈ ແລະ ສາມາດສື່ສານພາສາຮູບແບບຕ່າງໆ ໃຫ້ຜູ້ອື່ນເຂົ້າໃຈໄດ້ຕາມຄວາມຕ້ອງການ ນັບຕັ້ງແຕ່ຈາກພາສາທ້ອງຖິ່ນຈົນເຖິງພາສາຕ່າງປະເທດ.
- ພອນສະຫວັນດ້ານການໃຊ້ເຫດ-ຜົນ ແລະ ຄະນິດສາດ (Logical-Mathmatical Intelligence): ແມ່ນຄວາມສາມາດໃນການຄິດຢ່າງມີເຫດຜົນ ແລະ ມີປະສິດທິພາບ ເປັນແນວຄິດນາມມະທຳ, ຄາດເດົາ ແລະ ມີການຄິດໄລ່.
- ພອນສະຫວັນດ້ານມິຕິສຳພັນ (Visual-Sptial Intelligence): ແມ່ນການຮັບຮູ້ທາງສາຍຕາທີ່ດີ ສາມາດເຫັນພື້ນທີ່, ຮູບຮ່າງ, ໄລຍະທາງ ແລະ ຕຳແໜ່ງທີ່ກ່ຽວຂ້ອງກັນ ແລ້ວຖ່າຍທອດອອກມາໄດ້ຢ່າງກົມກຽວ ແລະ ມີຄວາມຮູ້ສຶກໄວຕໍ່ການຮັບຮູ້ທິດທາງ.
- ພອນສະຫວັນທາງດ້ານຮ່າງກາຍ ແລະ ການເຄື່ອນໄຫວ (Bodily-Kinesthetic Intelligence): ແມ່ນຄວາມສາມາດໃນການຄວບຄຸມ ແລະ ສະແດງຄວາມຄິດ, ຄວາມຮູ້ສຶກ ໂດຍໃຊ້ສ່ວນຕ່າງໆຂອງຮ່າງກາຍໄດ້ຢ່າງຄ່ອງແຄ່ວ, ເຂັ້ມແຂງ, ວ່ອງໄວ, ນຸ່ມນວນ, ປານີດ ແລະ ມີຄວາມໄວທາງປະສາດສຳພັດ.
- ພອນສະຫວັນທາງດ້ານດົນຕີ (Musical Intelligence): ແມ່ນຄວາມສາມາດໃນການຊຶມຊັບ ແລະ ການເຂົ້າເຖິງຄວາມງາມຂອງດົນຕີ ລວມທັງການໄດ້ຍິນ, ຮັບຮູ້, ຈົດຈຳ ແລະ ການສ້າງສັນຜົນງານ; ສາມາດຈົດຈຳຈັງຫວະ, ທຳນອງເພງ ແລະ ໂຄງສ້າງດົນຕີໄດ້ດີ ແລ້ວຖ່າຍທອດໂດຍການຮ້ອງເພງ, ເຄາະຈັງຫວະ, ຫລິ້ນດົນຕີ ແລະ ການລຳ.
- ພອນສະຫວັນທາງດ້ານມະນຸດສຳພັນ (Interpersonal Intelligence): ແມ່ນຄວາມສາມາດໃນການເຂົ້າໃຈຜູ້ອື່ນ ທັງຄວາມຮູ້ສຶກນຶກຄິດ, ອາລົມ ແລະ ແລະເຈຕະນາພາຍໃນ; ມີຄວາມໄວໃນການສັງເກດອາການທາງສີໜ້າ, ທ່າທາງ, ສຽງ ແລະ ສາມາດຕອບສະໜອງໄດ້ຢ່າງເໝາະສົມ ສ້າງມິດຕະພາບໄດ້ງ່າຍ ສາມາດເຈລະຈາ ແລະ ສາມາດຈູງໃຈຄົນອື່ນໄດ້ເປັນຢ່າງດີ.
- ພອນສະຫວັນດ້ານຄວາມເຂົ້າໃຈຕົນເອງ (Intrapersonal Intelligence): ແມ່ນຄວາມສາມາດໃນການຮັບຮູ້ຕົນເອງ ສາມາດຮູ້ທັນອາລົມ, ຄວາມຮູ້ສຶກ, ຄວາມຄິດ, ຄວາມຄາດຫວັງ, ຄວາມປາຖະໜາ ແລະ ຕົວຕົນຂອງຕົນເອງ ສາມາດຄວບຄຸມການສະແດງອອກໄດ້ຢ່າງເໝາະສົມ ຕາມກາລະເທສະ ແລະ ໂອກາດ.
- ພອນສະຫວັນດ້ານຄວາມຮັບຮູ້ທຳມະຊາດວິທະຍາ (Naturalist Intelligence): ແມ່ນຄວາມສາມາດໃນການຮັບຮູ້ ແລະ ເຂົ້າໃຈທຳມະຊາດຢ່າງເລິກເຊິ່ງ ເຂົ້າໃຈປະກົດການ ແລະ ການກຳເນີດຕ່າງໆຂອງທຳມະຊາດ, ມີຄວາມໄວຕໍ່ການສັງເກດການ ເພື່ອຄາດຄະເນຄວາມເປັນໄປຂອງທຳມະຊາດ, ມີຄວາມສາມາດໃນການຈຳແນກປະເພດ ຂອງສິ່ງມີຊີວິດໄດ້ ທັງພືດ ແລະ ສັດ.

**ຂໍ້ມູນຈາກ:**
**www.babybestbuy.in.th**

**ສາລາກະວີ**

# ການນຸ່ງຖືກໍສຳຄັນ

**# ໂດຍ: ຄົນຫລິງທາງ**

❈ ພະທາດຫລວງສະຫງ່າຕັ້ງ
ແນມເບິ່ງເຮືອງໆແສງ
ຄວາມຊ່າລືຄົນເວົ້າ
ທະນົງໃຈເອກອ້າງ

ອີງໃຫຍ່ກາງເມືອງ
ໂອບຄຳລາຄາຕົ້
ແດນໄກປະເທດຕ່າງ
ປະຊາເຊື້ອຊາດລາວ

❈ ບຸນທາດຫລວງເລີ່ມຂຶ້ນ
ຮີດຄອງເຄີຍກະທຳ
ເຫັນປະຊາຫັນຫ້າວ
ບົ່ງບອກເຖິງຮີດເຄົ້າ

ໃນວ່າງເດືອນສິບສອງ
ຊູ່ປີບໍ່ມີເວັ້ນ
ກະທຳບຸນໜູນສິ່ງ
ບໍ່ເຄີຍເສົ້າເກົ່າຖອຍ

❈ ແລລໍ່າສາວສໍ່ານ້ອຍ
ເກົ້າຜົມງາມເປຍມັດ
ສິນເປັນຍິງລາວແທ້
ເຫລືອໃຫ້ແຍງລຳສິ້ງ

ສວມສິ້ນລ່າມງາມດີ
ບ່ຽງແພສະໄບບົ້ງ
ຍາມແລບໍ່ເຄີຍເບື່ອ
ເຫັນແລ້ວອີ່ມພະໄມ

❈ ປາສະຈາກບໍ່ໄດ້
ຊຸມສະຕິລືມຕົວ
ນຸ່ງເຄື່ອງເຂີນກົດເຂົ້າ
ເຮັດໃຫ້ໝອງໝົ່ນເສົ້າ

ສະໄໝໃໝ່ໄອທີ
ບໍ່ຫ່ວງນຳຄອງເຄົ້າ
ໃນງານປະຈານຮີດ
ໃຈເຈົ້າບໍ່ລະອາຍ

❈ ພາກັນຍົວລະຍາດຍ້າຍ
ດວງພະໄທຮຽມໝອງ
ແນວຮີດຄອງຄົນເຖົ້າ
ເຈົ້າຊ່າງລືມລຶບຖິ້ມ

ເດີນຍ່າງສະໜາມຫລວງ
ເມື່ອສ່ອງແນມນຳເຈົ້າ
ບູຮານລາວສອນສັ່ງ
ສວມໂສ້ງສັ້ນຊ່າງບໍ່ອາຍ

❈ ສິ້ນລາວລາຍງາມສະຫງ່າແທ້
ຍິງທີ່ດີຄວນຮັກ
ຢ່າຊິເອົາສະເກີດໂສ້ງ
ມາປົນເປແປກເປື້ອນ

ຍໍຍິ່ງສັກສີ
ຮີດເດີມດາເຄົ້າ
ແນວເຂົາຂອງນອກ
ເຫັນແລ້ວເມື່ອຍລະອາ ແທ້ແລ້ວ!



**ສຸຂະພາບທາຍໂຣຄ**

# ອາຫານທີ່ບໍ່ຄວນກິນຕອນທ້ອງວ່າງ

**ແປ ແລະ ຮຽບຮຽງໂດຍ: ສາວແວ່ນ**

**1. ໝາກໄມ້ທີ່ມີລົດຊາດສົ້ມ ແລະ ວິຕາມິນຊີຫລາຍ**

ເຮົາມັກຈະໄດ້ຍິນວ່າວິຕາມິນຊີ ຄວນກິນຫລັງອາຫານ ເປັນເຫດຜົນດຽວກັນກັບໝາກໄມ້ລົດຊາດສົ້ມຕ່າງໆ ເຊັ່ນ: ໝາກກ້ຽງ, ໝາກນາວ, ໝາກນັດ, ແລະ ໝາກໄມ້ທີ່ມີລົດສົ້ມອື່ນໆ ເພາະລົດຊາດສົ້ມ ແລະ ວິຕາມິນຊີ ມີສ່ວນເຮັດໃຫ້ກະເພາະມີອາການບາດເຈັບ ຫລື ແສບ ໂດຍສະເພາະຄົນເຈັບທີ່ເປັນພະຍາດກະເພາະ ແລະ ລຳໄສ້ ຫລື ລະບົບຍ່ອຍອາຫານ.

**2. ອາຫານລົດຊາດເຜັດ**

ການກິນອາຫານທີ່ມີລົດຊາດເຜັດ ໃນຕອນທ້ອງວ່າງຈະເຂົ້າໄປກະຕຸ້ນລະບົບຍ່ອຍອາຫານ ເຮັດໃຫ້ມີອາການລະຄາຍເຄືອງ ທັງໄປທຳລາຍນ້ຳເມືອກທີ່ເຄືອບກະເພາະຈົນນຳໄປສູ່ການເຈັບກະເພາະ.

**3. ນົມສົ້ມ ຫລື ໂຢເກີດ**

ໂຢເກີດມີໂພໄບໂອຕິກ ເຊິ່ງເປັນເຊື້ອແບັກທີເລຍດີ ທີ່ຊ່ວຍຮັກສາລຳໄສ້ໃຫ້ມີສຸຂະພາບດີ ແຕ່ຖ້າກິນໃນຕອນທ້ອງວ່າງ ອາຊິດຮາຍໂດຄໍຣິກທີ່ກະເພາະລັ່ງອອກມາ ຈະສົ່ງຜົນບໍ່ດີຕໍ່ແບັກທີເລຍໄດ້ ສະນັ້ນ, ຈຶ່ງຄວນຮັບປະທານຫລັງຈາກກິນອາຫານດີທີ່ສຸດ.

**4. ອາຫານທີ່ມີທາດແປ້ງ ແລະ ນ້ຳຕານຫລາຍ**

ສຳລັບອາຫານເຊົ້າ ເຊິ່ງເປັນຄາບທຳອິດຂອງມື້ ຫລັງຈາກຫລາຍຊົ່ວໂມງທີ່ທ້ອງວ່າງ ການກິນອາຫານທີ່ມີທາດແປ້ງ ແລະ ນ້ຳຕານຫລາຍ ເຊັ່ນ: ທັນຍາພືດ, ເຂົ້າຈີ່ຂາວທີ່ມີກວນໝາກໄມ້ຕ່າງໆ ອາດຈະເຮັດໃຫ້ຮ່າງກາຍດື້ຕໍ່ອິນຊູລິນໃນໄລຍະຍາວ ອາດຈະເພີ່ມຄວາມສ່ຽງຕໍ່ພະຍາດເບົາຫວານ ລວມທັງພະຍາດໝາກໄຂ່ຫລັງນຳອີກ.

**5. ຊາ, ກາເຟ ແລະ ນ້ຳອັດລົມ**

ເມື່ອທ້ອງວ່າງ ຮ່າງກາຍຈະປ່ອຍອາຊິດຮາຍໂດຄໍຣິກ ເຊິ່ງເຮັດໃຫ້ສະພາບແວດລ້ອມກະເພາະອາຫານເປັນກົດ ແລະຄາເຟອີນໃນຊາ, ກາເຟ ແລະ ນ້ຳອັດລົມ ກະຕຸ້ນໃຫ້ມີຄວາມເປັນກົດຂຶ້ນຫລາຍ ເຊິ່ງຖ້າບໍ່ມີອາຫານຢູ່ໃນກະເພາະອາຫານ ກົດນີ້ຈະທຳລາຍກະເພາະ ເຮັດໃຫ້ເກີດພະຍາດກະເພາະອາຫານ ແລະ ນຳໄປສູ່ການເປັນກົດໄຫລຍ້ອນ ເພື່ອປ້ອງກັນກົດໃນກະເພາະ ຄວນກິນອາຫານເລັກນ້ອຍ ກ່ອນທີ່ຈະກິນຊາ, ກາເຟ ຫລື ນ້ຳອັດລົມຕ່າງໆ.

**www.sanook.com**



# ກົດໝາຍວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່

ຕໍ່ຈາກສະບັບກ່ອນ...

**ມາດຕາ 30 ການຂຽນຊື່ພູມີປະເທດໃນການສ້າງແຜນທີ່ວຽກສະເພາະ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ສ້າງແຜນທີ່ຮັບໃຊ້ວຽກງານສະເພາະໃດໜຶ່ງຂອງຕົນ ຕ້ອງຂຽນຊື່ພູມີປະເທດ ຕາມຫຼັກການທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້ ເພື່ອໃຫ້ສາມາດນຳໃຊ້ຂໍ້ມູນຮ່ວມກັນໄດ້.

**ໝວດທີ 3**
**ການພິມແຜນທີ່**

**ມາດຕາ 31 ການພິມແຜນທີ່**

ການພິມແຜນທີ່ ແມ່ນ ຂະບວນການຕົກແຕ່ງ ແລະ ຜະລິດແຜນທີ່ດ້ວຍການພິມ,ຈັດພິມ ເປັນແຜ່ນ, ສື່ສິ່ງພິມເອເລັກໂຕຣນິກ ຫຼື ສື່ສິ່ງພິມອື່ນ ເພື່ອນຳໃຊ້, ຈຳໜ່າຍ ແລະ ບໍລິການ.

ການຈັດພິມແຜນທີ່ ຕ້ອງສະແດງໃຫ້ເຫັນ ຂອບເຂດອຳນາດອະທິປະໄຕ, ຊາຍແດນ ແລະ ຂອບເຂດການປົກຄອງ ຢ່າງຖືກຕ້ອງ ແລະ ຊັດເຈນ.

ການຈັດພິມແຜນທີ່ ມີ ດັ່ງນີ້:

1. ການພິມດ້ວຍປລອດເຕີ (Plotter);
2. ການພິມດ້ວຍອັອບເຊັດ (Offset).

**ມາດຕາ 32 ການຄຸ້ມຄອງການພິມແຜນທີ່**

ກະຊວງພາຍໃນ ເປັນຜູ້ພິມແຜນທີ່ພູມສັນຖານ ແລະ ແຜນທີ່ວຽກສະເພາະ ທີ່ກ່ຽວຂ້ອງ ເພື່ອຮັບໃຊ້ການຄຸ້ມຄອງລັດ, ການພັດທະນາເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານອື່ນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງພິມແຜນທີ່ວຽກສະເພາະ ເພື່ອຮັບໃຊ້ວຽກງານຂອງຕົນ ຕ້ອງນຳເອົາແຜນທີ່ວຽກສະເພາະສະບັບຮ່າງຂອງຕົນ ທີ່ພົວພັນກັບຂໍ້ມູນທີ່ສຳຄັນ ແລະ ຈຳເປັນ ສະເໜີຜ່ານພະແນກພາຍໃນ ແຂວງ, ນະຄອນຫຼວງ ແລ້ວສົ່ງໃຫ້ກະຊວງພາຍໃນ ຕາມສາຍຕັ້ງຂອງຕົນ ເພື່ອກວດກາຢັ້ງຢືນຄວາມຖືກຕ້ອງພາຍໃນເວລາ ສິບຫ້າວັນ.

ການພິມແຜນທີ່ ຕ້ອງປະຕິບັດຕາມກົດໝາຍສະບັບນີ້, ກົດໝາຍວ່າດ້ວຍການພິມຈຳໜ່າຍ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ພາກທີ IV**
**ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ**
**ໝວດທີ 1**
**ລະບົບຂໍ້ມູນ ຂ່າວສານ ພູມສາດ**

**ມາດຕາ 33 ລະບົບຂໍ້ມູນ ຂ່າວສານ ພູມສາດ**

ລະບົບຂໍ້ມູນ ຂ່າວສານ ພູມສາດ ແມ່ນ ຂໍ້ມູນ, ສະຖິຕິ ກ່ຽວກັບພື້ນທີ່ທີ່ເຊື່ອມໂຍງກັບຂໍ້ມູນຄຸນລັກສະນະຂອງຂໍ້ມູນ ຂ່າວສານພູມສາດ ໂດຍຜ່ານຂະບວນການປັບປຸງ, ວິເຄາະ ແລະ ເກັບຮັກສາ ດ້ວຍລະບົບເອເລັກໂຕຣນິກ ຊຶ່ງປະກອບດ້ວຍ:

ຂໍ້ມູນເວັກເຕີ (Vector) ແມ່ນຂໍ້ມູນພື້ນທີ່ໃນລະບົບຂໍ້ມູນ ຂ່າວສານພູມສາດທີ່ຖືກກຳນົດດ້ວຍຄ່າພິກັດ ຊຶ່ງສະແດງອອກໃນ ສາມຮູບແບບ ດັ່ງນີ້:

ກ. ຮູບແບບຈຸດ ເປັນຕົ້ນ ຈຸດທີ່ຕັ້ງບ້ານ, ໂຮງຮຽນ, ໂຮງໝໍ, ຈຸດຄວາມສູງ;

ຂ. ຮູບແບບເສັ້ນ ເປັນຕົ້ນ ເສັ້ນທາງຄົມມະນາຄົມ, ເສັ້ນແມ່ນ້ຳ, ເສັ້ນລະດັບຄວາມສູງ;

ຄ. ຮູບແບບເນື້ອທີ່ ເປັນຕົ້ນ ຂອບເຂດປ່າໄມ້, ຂອບເຂດແດນຂອງບ້ານ, ເມືອງ, ເທດສະບານ, ນະຄອນ, ແຂວງ, ນະຄອນຫຼວງ, ປະເທດ.

2. ຂໍ້ມູນຣາສເຕີ (Raster) ແມ່ນ ຂໍ້ມູນພື້ນທີ່ໃນລະບົບຂໍ້ມູນ ຂ່າວສານ ພູມສາດ ເປັນຕົ້ນ ຂໍ້ມູນພາບຖ່າຍທາງອາກາດ ແລະ ພາບຖ່າຍດາວທຽມ.

ຂໍ້ມູນຣາສເຕີ (Raster) ສະແດງອອກ ໃນຮູບແບບສີ່ຫຼ່ຽມຈະຕຸລັດ ແຕ່ລະຮູບສີ່ຫຼ່ຽມ ຖືກກຳກັບດ້ວຍຕົວເລກທີ່ບົ່ງບອກເຖິງຄວາມລະອຽດຂອງຂໍ້ມູນຈຸດພາບ, ມີຫົວໜ່ວຍເປັນພິກເຊວ.

**ມາດຕາ 34 ປະເພດຂໍ້ມູນ ຂ່າວສານ ພູມສາດ**

ຂໍ້ມູນ ຂ່າວສານ ພູມສາດ ມີ ສອງປະເພດ ດັ່ງນີ້:

1. ຂໍ້ມູນ ຂ່າວສານ ພູມສາດ, ຜະລິດຕະພັນສຳຫຼວດວັດແທກ ແລະ ແຜນທີ່ພື້ນຖານ;
2. ຂໍ້ມູນ ຂ່າວສານ ພູມສາດ, ຜະລິດຕະພັນສຳຫຼວດວັດແທກ ແລະ ແຜນທີ່ວຽກສະເພາະ.

**ມາດຕາ 35 ຂໍ້ມູນ ຂ່າວສານ ພູມສາດ, ຜະລິດຕະພັນສຳຫຼວດວັດແທກ ແລະ ແຜນທີ່ພື້ນຖານ**

ຂໍ້ມູນ ຂ່າວສານ ພູມສາດ, ຜະລິດຕະພັນສຳຫຼວດວັດແທກ ແລະ ແຜນທີ່ພື້ນຖານ ມີ ດັ່ງນີ້:

1. ສຳນວນຂອງຂໍ້ມູນ ການສຳຫຼວດວັດແທກ ແລະ ແຜນທີ່;
2. ຂໍ້ມູນກ່ຽວກັບຕາໜ່າງເຄົ້າການສຳຫຼວດວັດແທກແຫ່ງຊາດ;
3. ຂໍ້ມູນພາບຖ່າຍ;
4. ຂໍ້ມູນແຜນທີ່ພູມສັນຖານ;
5. ຂໍ້ມູນຜະລິດຕະພັນການສຳຫຼວດວັດແທກ ແລະ ແຜນທີ່ເສັ້ນຊາຍແດນແຫ່ງຊາດ;
6. ຂໍ້ມູນຜະລິດຕະພັນການສຳຫຼວດວັດແທກ ແລະ ແຜນທີ່ການປົກຄອງແຕ່ລະຂັ້ນ;
7. ຂໍ້ມູນຊື່ພູມີປະເທດ;
8. ຜົນໄດ້ຮັບຈາກການຄົ້ນຄວ້າວິທະຍາສາດ ແລະ ການພັດທະນາເຕັກໂນໂລຊີ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່;
9. ນິຕິກຳ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ລວມທັງມາດຕະຖານເຕັກນິກ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່.

**ມາດຕາ 36 ຂໍ້ມູນ ຂ່າວສານ ພູມສາດ, ຜະລິດຕະພັນຂອງການສຳຫຼວດວັດແທກ ແລະ ແຜນທີ່ວຽກສະເພາະ**

ຂໍ້ມູນ ຂ່າວສານ ພູມສາດ, ຜະລິດຕະພັນຂອງການສຳຫຼວດວັດແທກ ແລະ ແຜນທີ່ວຽກສະເພາະ ມີ ດັ່ງນີ້:

1. ແຜນທີ່ເສັ້ນຊາຍແດນແຫ່ງຊາດ;
2. ແຜນທີ່ເສັ້ນເຂດແດນເຊື່ອມຕໍ່;
3. ແຜນທີ່ການປົກຄອງ;
4. ແຜນທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
5. ແຜນທີ່ຕາດິນ;
6. ແຜນທີ່ປ່າໄມ້;
7. ແຜນທີ່ອຸທົກກະສາດ;
8. ແຜນທີ່ຕາໜ່າງຄົມມະນາຄົມ;
9. ແຜນທີ່ກິດຈະກຳໂຄງການໃຕ້ດິນ;
10. ແຜນທີ່ຄວາມສ່ຽງໄພພິບັດ;
11. ແຜນທີ່ທໍລະນີສາດ ແລະ ແຮ່ທາດ;
12. ແຜນທີ່ວຽກສະເພາະອື່ນທີ່ກ່ຽວຂ້ອງ.

**ມາດຕາ 37 ການສົ່ງຂໍ້ມູນ ຂ່າວສານ ພູມສາດ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ສ້າງ, ດັດແກ້, ຂໍ້ມູນ ຂ່າວສານ ພູມສາດ, ຜະລິດຕະພັນສຳຫຼວດວັດແທກ ແລະ ແຜນທີ່ ຕ້ອງສົ່ງຂໍ້ມູນດັ່ງກ່າວ ທີ່ຈຳເປັນ ເປັນຕົ້ນ ຂໍ້ມູນເສັ້ນເຂດແດນເຊື່ອມຕໍ່, ຂໍ້ມູນການສຳຫຼວດວັດແທກຂອງຂະແໜງການ, ຈຸດທີ່ຕັ້ງຂອງບ້ານ ໃຫ້ພະແນກພາຍໃນ ແຂວງ, ນະຄອນຫຼວງ ແລ້ວສົ່ງໃຫ້ກະຊວງພາຍໃນ ຕາມສາຍຕັ້ງຂອງຕົນ ເພື່ອແລກປ່ຽນ ແລະ ເອົາຂໍ້ມູນເຂົ້າໃນລະບົບຂໍ້ມູນຂ່າວສານ ພູມສາດ ແລະ ສາມາດເຊື່ອມໂຍງກັບຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ຕາມການອະນຸຍາດຂອງກະຊວງພາຍໃນ.

**ໝວດທີ 2**
**ຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ**

**ມາດຕາ 38 ຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ**

ຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ແມ່ນ ບ່ອນເກັບກຳ, ສັງລວມ, ເກັບຮັກສາ ແລະ ສະໜອງຂໍ້ມູນ ຂ່າວສານ ພູມສາດ ໃນຮູບແບບພິມ ແລະ ຮູບແບບເອເລັກໂຕຣນິກໄວ້ບ່ອນດຽວກັນ ແລະ ສາມາດນຳໃຊ້ ຫຼື ເອີ້ນໃຊ້ຂໍ້ມູນທຸກຄັ້ງທີ່ຕ້ອງການ.

ຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ປະກອບດ້ວຍ ຖານຂໍ້ມູນແຜນທີ່ພື້ນຖານ ແລະ ຖານຂໍ້ມູນແຜນທີ່ວຽກສະເພາະ.

**ມາດຕາ 39 ຖານຂໍ້ມູນແຜນທີ່ພື້ນຖານ**

ຖານຂໍ້ມູນແຜນທີ່ພື້ນຖານ ແມ່ນ ບ່ອນເກັບກຳ, ສັງລວມ, ເກັບຮັກສາ ແລະ ສະໜອງຂໍ້ມູນ ຂ່າວສານ ພູມສາດ ກ່ຽວກັບ ຂໍ້ມູນພື້ນຖານສຳລັບສ້າງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ.

ຖານຂໍ້ມູນແຜນທີ່ພື້ນຖານ ມີ ດັ່ງນີ້:

1. ຂໍ້ມູນຕາໜ່າງການສຳຫຼວດວັດແທກພື້ນຖານແຫ່ງຊາດ;
2. ຂໍ້ມູນແຜນທີ່ພູມສັນຖານ;
3. ຂໍ້ມູນພາບຖ່າຍທາງອາກາດ, ພາກພື້ນດິນ ແລະ ພື້ນນ້ຳ;
4. ຂໍ້ມູນແຜນທີ່ເສັ້ນຊາຍແດນແຫ່ງຊາດ;
5. ຂໍ້ມູນແຜນທີ່ການປົກຄອງ;
6. ຂໍ້ມູນຊື່ພູມີປະເທດ.

**ມາດຕາ 40 ຖານຂໍ້ມູນແຜນທີ່ວຽກສະເພາະ**

ຖານຂໍ້ມູນແຜນທີ່ວຽກສະເພາະ ແມ່ນ ບ່ອນເກັບກຳ, ສັງລວມ, ເກັບຮັກສາ ແລະ ສະໜອງຂໍ້ມູນຂ່າວສານ ພູມສາດ ກ່ຽວກັບ ຂໍ້ມູນວຽກສະເພາະ ທີ່ສາມາດໃຊ້ຮ່ວມກັນ ສຳລັບສ້າງຖານຂໍ້ມູນ-ຂ່າວສານ ພູມສາດແຫ່ງຊາດ.

ຖານຂໍ້ມູນແຜນທີ່ວຽກສະເພາະ ມີ ດັ່ງນີ້:

1. ຂໍ້ມູນການສຳຫຼວດວັດແທກ ແລະ ສ້າງແຜນທີ່ເສັ້ນຊາຍແດນແຫ່ງຊາດ;
2. ຂໍ້ມູນການສຳຫຼວດວັດແທກ ແລະ ສ້າງແຜນທີ່ເສັ້ນເຂດແດນເຊື່ອມຕໍ່;
3. ຂໍ້ມູນການສຳຫຼວດວັດແທກ ແລະ ສ້າງແຜນທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
4. ຂໍ້ມູນການສຳຫຼວດວັດແທກ ແລະ ສ້າງແຜນທີ່ຕາດິນ;
5. ຂໍ້ມູນການສຳຫຼວດວັດແທກ ແລະ ສ້າງແຜນທີ່ການປົກຄອງ;
6. ຂໍ້ມູນການສຳຫຼວດວັດແທກແລະສ້າງແຜນທີ່ຕາໜ່າງຄົມມະນາຄົມ;
7. ຂໍ້ມູນການສຳຫຼວດວັດແທກ ແລະ ສ້າງແຜນທີ່ກິດຈະກຳໂຄງການໃຕ້ດິນ;
8. ຂໍ້ມູນການສຳຫຼວດວັດແທກ ແລະ ສ້າງແຜນທີ່ຄວາມສ່ຽງໄພພິບັດ;
9. ຂໍ້ມູນແຜນທີ່ ສຳລັບແຜນຍຸດທະສາດຂອງຂະແໜງການ, ແຂວງ, ນະຄອນຫຼວງ, ແຜນພັດທະນາເຂດເສດຖະກິດພິເສດ;
10. ຂໍ້ມູນການສຳຫຼວດວັດແທກແລະສ້າງແຜນທີ່ກະສິກຳແລະປ່າໄມ້;
11. ຂໍ້ມູນການສຳຫຼວດວັດແທກ ແລະ ສ້າງແຜນທີ່ທໍລະນີສາດ ແລະ ແຮ່ທາດ;
12. ຂໍ້ມູນການສຳຫຼວດວັດແທກ ແລະ ສ້າງແຜນທີ່ວຽກສະເພາະອື່ນທີ່ກ່ຽວຂ້ອງ.

**ມາດຕາ 41 ການສ້າງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ**

ກະຊວງພາຍໃນ ເປັນເຈົ້າການປະສານສົມທົບ ກັບກະຊວງ, ອົງການຂອງລັດ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ສ້າງຖານຂໍ້ມູນ-ຂ່າວສານ ພູມສາດແຫ່ງຊາດ ດັ່ງນີ້:

1. ສ້າງແຜນຍຸດທະສາດການພັດທະນາ, ແຜນການຈັດຕັ້ງປະຕິບັດໂຄງສ້າງຖານຂໍ້ມູນ-ຂ່າວສານ ພູມສາດແຫ່ງຊາດ ເພື່ອສະເໜີລັດຖະບານພິຈາລະນາ;
2. ສ້າງ ກົນໄກ, ນະໂຍບາຍ ແລະ ຊັບພະຍາກອນ ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດພັດທະນາ, ແຜນການຈັດຕັ້ງປະຕິບັດໂຄງສ້າງຖານຂໍ້ມູນ-ຂ່າວສານ ພູມສາດແຫ່ງຊາດ;
3. ຄັດເລືອກ ແລະ ນຳໃຊ້ເຕັກໂນໂລຊີ, ສ້າງມາດຕະຖານ ແລະ ຂໍ້ກຳນົດດ້ານເຕັກນິກ ກ່ຽວກັບການສ້າງຖານຂໍ້ມູນ-ຂ່າວສານ ພູມສາດແຫ່ງຊາດ;
4. ປະມວນ ແລະ ເຊື່ອມໂຍງຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ, ສ້າງ ແລະ ກຳນົດ ປະຕູເຂົ້າສູ່ຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ລວມທັງການນຳໃຊ້, ການໃຫ້ບໍລິການ, ການແລກປ່ຽນ ແລະ ການພັດທະນາ ຂໍ້ມູນ ຂ່າວສານ ດັ່ງກ່າວ.

**ມາດຕາ 42 ການເຂົ້າເຖິງຂໍ້ມູນ-ຂ່າວສານ ພູມສາດແຫ່ງຊາດ**

ກະຊວງພາຍໃນ ອະນຸຍາດໃຫ້ເຂົ້າເຖິງຂໍ້ມູນ-ຂ່າວສານ ພູມສາດ, ໃຫ້ການບໍລິການ ແລະ ສະໜອງຂໍ້ມູນ ຂ່າວສານ ທີ່ກ່ຽວຂ້ອງທາງເວບໄຊ ຫຼື ຊ່ອງທາງອື່ນ ທີ່ກຳນົດໃຫ້ ເພື່ອຮັບປະກັນໃຫ້ແກ່ຜູ້ຊົມໃຊ້ສາມາດເຂົ້າເຖິງໄດ້ງ່າຍ, ສະດວກ ແລະ ວ່ອງໄວ.

ສຳລັບຂໍ້ມູນທີ່ເປັນຄວາມລັບຂອງຊາດ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈະບໍ່ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາກເອກະຊົນ ພາຍໃນ ແລະ ຕ່າງປະເທດ ເຂົ້າເຖິງ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກກະຊວງພາຍໃນ ແລະ ກະຊວງອື່ນທີ່ກ່ຽວຂ້ອງ.

**ມາດຕາ 43 ຫຼັກການກ່ຽວກັບການສ້າງຖານຂໍ້ມູນ-ຂ່າວສານ ພູມສາດແຫ່ງຊາດ**

ການສ້າງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງຂໍ້ມູນ-ຂ່າວສານພູມສາດ ທີ່ເກັບກຳຈາກກະຊວງ, ອົງການຂອງລັດ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ສອດຄ່ອງກັບມາດ ຕະຖານເຕັກນິກທີ່ປະກາດໃຊ້ໃນແຕ່ລະໄລຍະ;
2. ຮັບປະກັນການປັບປຸງຢ່າງເປັນປົກກະຕິ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການຄຸ້ມຄອງລັດ, ການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
3. ຮັບປະກັນການຄຸ້ມຄອງໄພພິບັດ, ການກູ້ຊີບ, ການກູ້ໄພ ແລະ ການຮັບມືກັບການປ່ຽນແປງຂອງດິນຟ້າອາກາດ;

ອ່ານຕໍ່ສະບັບໜ້າ...




## ຂໍຄວາມຊ່ວຍເຫລືອ

**# ໂດຍ: ປ່າວກະບື**

ຊາຍຄົນໜຶ່ງເຄື່ອນຄືງຫຍັບເຂົ້າໄປໃກ້ໆສາວງາມຍ້ອຍ ຢູ່ຮ້ານສັບພະສິນຄ້າຫລັງໃຫຍ່.

"ຍານາງ... ຄືຈັ່ງຊີ້.... ຂ້ອຍຊອກຫາເມຍຂ້ອຍບໍ່ເຫັນໃນຮ້ານນີ້ຫັ້ນລະ ຍານາງພໍຊິລົມກັບຂ້ອຍຈັກສອງສາມນາທີໄດ້ບໍ່ນໍ?"

"ເປັນຫຍັງຈຶ່ງລົມ?" ຍິງຄົນງາມຖາມ

"ເພາະວ່າ ທຸກຄັ້ງເມື່ອຂ້ອຍລົມກັບສາວງາມໆ ເມຍຂ້ອຍມັກຈະໂປໂລໜ້າອອກມາຈາກທຸກບ່ອນໂລດ" ຝ່າຍຊາຍຕອບ.

## ASKING FOR HELP

**# By: BAOKBU**

The man approached a very beautiful woman in a large supermarket.

"You know, I've lost my wife here in the supermarket. Can you talk to me for a couple of minutes?"

"Why?" asked the beautiful woman.

"Because every time I talk to a beautiful woman, my wife appears out of nowhere" said the man.













# ຈີນຈະຍຶດໝັ້ນຊຸກຍູ້ການພັດທະນາທີ່ມີຄຸນນະພາບສູງ, ສ້າງໂອກາດໃຫ້ທົ່ວໂລກດ້ວຍການພັດທະນາຕົວເອງ



ຕາມການລາຍງານຂ່າວໃນວັນທີ 23 ຕຸລາ 2022 ໃຫ້ຮູ້ວ່າ ກອງປະຊຸມຄົບຄະນະຄັ້ງທີ 1 ຂອງຄະນະກຳມະການສູນກາງພັກຄອມມູນິດຈີນ ຊຸດທີ 20 ໄດ້ເລືອກຕັ້ງຜູ້ນຳສູນກາງພັກຄອມມູນິດຈີນຊຸດໃໝ່. ໄດ້ເລືອກຕັ້ງທ່ານ ສີຈິ້ນຜິງ ໃຫ້ສືບຕໍ່ດຳລົງຕຳແໜ່ງເປັນເລຂາທິການໃຫຍ່ສູນກາງພັກຄອມມູນິດຈີນອີກສະໄໝໜຶ່ງ.

ໃນກອງປະຊຸມຖະແຫລງຂ່າວຂອງຄະນະປະຈຳກົມການເມືອງສູນກາງພັກຄອມມູນິດ ຈີນສະໄໝທີ 20, ທ່ານ ສີຈິ້ນຜິງ ເລຂາທິການໃຫຍ່ສູນກາງພັກຄອມມູນິດຈີນ ກ່າວວ່າ: ຈີນ ຈະຍຶດໝັ້ນຊຸກຍູ້ການພັດທະນາທີ່ມີຄຸນນະພາບສູງຢ່າງເດັດດ່ຽວບໍ່ປ່ຽນແປງ, ສ້າງໂອກາດໃຫ້ແກ່ທົ່ວໂລກຫລາຍກວ່າເກົ່າດ້ວຍການພັດທະນາຕົວເອງ.

ທ່ານ ສີຈິ້ນຜິງ ກ່າວວ່າ: ຄວາມເປັນທັນສະໄໝແບບປະເທດຈີນແມ່ນໝາກຜົນທີ່ໄດ້ຮັບຈາກການຄົ້ນຄວ້າ ແລະ ການປະຕິບັດຕົວຈິງມາເປັນໄລຍະຍາວຂອງພັກຄອມມູນິດຈີນ ແລະ ປະຊາຊົນຈີນ, ແມ່ນຜາລະກິດທີ່ຍິ່ງໃຫຍ່ ແຕ່ກໍເຕັມໄປດ້ວຍຄວາມລຳບາກ. ໃນຂະບວນການອອກເດີນທາງຄັ້ງໃໝ່, ພັກຄອມມູນິດຈີນຈະສືບຕໍ່ຍຶດໝັ້ນທຸກສິ່ງທຸກຢ່າງມາຈາກປະຊາຊົນ, ແລະ ທຸກສິ່ງທຸກຢ່າງເພື່ອປະຊາຊົນ ປ່ຽນຄວາມປາຖະໜາທີ່ຫວັງໃຫ້ຊີວິດການເປັນຢູ່ອັນດີງາມຂອງປະຊາຊົນໃຫ້ບັນລຸຜົນເປັນຈິງຢ່າງບໍ່ຢຸດຢັ້ງ.

ທ່ານ ສີຈິ້ນຜິງ ເນັ້ນໜັກວ່າ, ພັກຄອມມູນິດຈີນຈະຊຸກຍູ້ການປະຕິຮູບຕົນເອງໂດຍຕະຫລອດມາ, ຊຸກຍູ້ການກໍ່ສ້າງພັກຢ່າງເຄັ່ງຄັດຮອບດ້ານ, ເຮັດໃຫ້ພັກຄອມມູນິດຈີນທີ່ມີປະຫວັດສາດຮ້ອຍປີເຕັມໄປດ້ວຍພະລັງຊີວິດໃໝ່ຢ່າງບໍ່ຢຸດຢັ້ງໃນການປະຕິຮູບຕົນເອງ, ແລະ ກາຍເປັນຫົວຈັກຫລັກແຫລ່ງທີ່ເຂັ້ມແຂງທີ່ສຸດ ແລະ ໄວ້ໃຈໄດ້ທີ່ສຸດຂອງປະຊາຊົນຈີນຕະຫລອດໄປ.

ທ່ານ ສີຈິ້ນຜິງ ກ່າວຕື່ມວ່າ: ການພັດທະນາຂອງຈີນປາສະຈາກໂລກບໍ່ໄດ້, ການພັດທະນາຂອງໂລກກໍຕ້ອງການຈີນເຊັ່ນດຽວກັນ, ປະເທດຈີນຈະຮ່ວມກັນກັບປະຊາຊົນຂອງປະເທດຕ່າງໆໃນໂລກ, ສົ່ງເສີມຄ່ານິຍົມຮ່ວມຂອງມວນມະນຸດທີ່ສັນຕິພາບ, ການພັດທະນາ, ຍຸຕິທຳ, ຄວາມເປັນທຳ, ປະຊາທິປະໄຕ ແລະ ເສລີພາບ, ຮັກສາສັນຕິພາບຂອງໂລກ, ຊຸກຍູ້ການພັດທະນາຂອງໂລກ, ແລະສືບຕໍ່ຊຸກຍູ້ການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ.

# ໄທເປີດໂອກາດໃຫ້ຄົນຕ່າງປະເທດຊື້ທີ່ດິນ



ເມື່ອບໍ່ດົນມານີ້, ຄະນະລັດຖະບານໄທໄດ້ຜ່ານການຮັບຮອງຮ່າງກົດໝາຍສະບັບໜຶ່ງ ໂດຍໄດ້ອະນຸຍາດໃຫ້ຄົນສັນຊາດຕ່າງປະເທດທີ່ລົງທຶນຢູ່ໄທຢ່າງໜ້ອຍ 40 ລ້ານບາດນັ້ນ ສາມາດຊື້ທີ່ດິນທີ່ຖືກຈັດເປັນປະເພດໃຊ້ສຳລັບອາຄານບ້ານເຮືອນຢູ່ບາງກອກ, ພັດທະຍາ ແລະ ຕົວເມືອງອື່ນໆ ບໍ່ໃຫ້ເກີນ 1600 ຕາແມັດ ໂດຍການລົງທຶນດັ່ງກ່າວ ຕ້ອງດຳເນີນໄປຢ່າງໜ້ອຍ 3 ປີ ແລະ ໂຄງການການລົງທຶນ ລວມທັງພັນທະບັດແຫ່ງຊາດ, ອະສັງຫະລິມະຊັບ ແລະ ກອງທຶນພື້ນຖານໂຄງລ່າງ.

ກ່ອນໜ້ານີ້, ໄທອະນຸຍາດໃຫ້ແຕ່ຄົນສັນຊາດຕ່າງປະເທດຊື້ທີ່ດິນຜ່ານຮູບການລົງທະບຽນຕັ້ງບໍລິສັດຢູ່ໄທ ຫລື ເຊັນສັນຍາເຊົ່າໄລຍະຍາວກັບເຈົ້າຂອງທີ່ດິນເທົ່ານັ້ນ.

ສູນຂໍ້ມູນອະສັງຫະລິມະຊັບໄທຄາດຄະເນວ່າ: ພາຍຫລັງລັດຖະບານໄທຜ່ອນຜັນນະໂຍບາຍຊື້ທີ່ດິນແລ້ວ, ມູນຄ່າການລົງທຶນດ້ານອະສັງຫະລິມະຊັບຢູ່ໄທທີ່ບໍ່ແມ່ນພົນລະເມືອງໄທໃນແຕ່ລະປີອາດຈະເພີ່ມຂຶ້ນຮອດ 100 ຕື້ບາດ ເຊິ່ງຈະເພີ່ມຂຶ້ນໜຶ່ງເທົ່າຕົວເມື່ອທຽບໃສ່ມູນຄ່າການລົງທຶນດັ່ງກ່າວໃນໄລຍະກ່ອນມີການແຜ່ລະບາດຂອງພະຍາດໂຄວິດ-19.

| ຜູ້ຊີ້ນຳ | ຄະນະຊ່ຽວຊານທີ່ປຶກສາ | ຫົວໜ້າບັນນາທິການ | ກອງບັນນາທິການ | ອອກແບບຈັດໜ້າ |
|---|---|---|---|---|
| ທ່ານ ສີງຄຳ ວົງພະຈັນ | ທ່ານ ສີສຸພັນ ແສງສະຫວັນ | ທ່ານ ປອ. ພິດສະໄໝ ບຸນວິໄລ | ທ່ານ ນາງ ກົງໃຈ ແສງອຳພັນ | ທ່ານ ນາງ ກຸກກິກ ບຸດດາໄຊ |
| | ທ່ານ ວິເສດ ສະແຫວງສຶກສາ | ທ່ານ ຂັນທະວີ ວົງພະຈັນ | ທ່ານ ນາງ ສຸພາວັນ ທອມສະນິດ | ທ່ານ ສົມນຶກ ແກ້ວໄຊຍະຈັກ |
| | ທ່ານ ຄຳວິສັນ ແກ້ວສຸວັນ | ທ່ານ ເປຄຳ ລໍຄຳສອນ | ທ່ານ ນາງ ປາກາລັກ ພົມມີໄຊ | |

ບໍ່ໄດ້ຮັບໜັງສືພິມໂທ: +856 (21) 454563, ຕ້ອງການແຈ້ງຂ່າວໂທ: +856 (21) 413522
ອອກແບບ-ຈັດໜ້າໂດຍ: ນາງ ກຸກກິກ ບຸດດາໄຊ ແລະ ສົມນຶກ ແກ້ວໄຊຍະຈັກ